<u>ຄະນະຜູ້ຈັດທຳ ຄຳແນະນຳສຳລັບຄຣູສອນ</u>

**Copyright © 2007 by BAPTISTWAY PRESS®.**

ສງວນລິກຂະສິດ

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office.

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປື້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປື້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, ໒004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Teaching Procedures Writer for Lesson 1- 4
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lesson 1- 4
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 5-7
Bounchanh Vongsurith, Crievewood Baptist Church, Nashville, Tennessee
Editor for Lesson 5-7
Phaisane Somsith, Homeprakhoon Baptist Church, Dallas, Texas

Teaching Procedures Writer for Lesson 8- 10
Sidney Kahn, Saginaw Community Church, Fort Worth, Texas
Editor for Lesson 8-10
Phaisane Somsith, Homprakhoon Baptist Church, Dallas, Texas

Teaching Procedures Writer for Lesson 11-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lesson 11-13
Phaisane Somsith, Homprakhoon Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 1
# ເວລາສິ່ງທີ່ຊົ່ວຮ້າຍເກີດຂຶ້ນກັບຄົນທີ່ດີ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ 1:1, 1:6-2:10

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢບ 1:1-2:10

**ຈຸດສຳຄັນຂອງບົດຮຽນນີ້:** ຄວາມຈິງຂອງໂຢບ ບໍ່ແມ່ນວ່າເປັນຫຍັງບັນຫາຈຶ່ງເກີດຂຶ້ນແກ່ຄົນຊອບທັມ

**ຄຳຖາມເພື່ອສຳຣວດ:** ການດຳເນີນໃນທາງຊອບທັມ ເປັນສິ່ງປ້ອງກັນສິ່ງທີ່ບໍ່ດີໄດ້ບໍ່?

**ຈຸດປະສົງຂອງບົດຮຽນ:** ເພື່ອຣວບຣວມເຣື່ອງຂອງໂຢບແລະສຶກສາເບິ່ງຄຳຖາມຂອງລາວ ເມື່ອບັນຫາເກີດຂຶ້ນ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ຢັ້ງຢືນວ່າພຣະຄັມພີມີອຳນາດ ນຳພາຊີວິດ ໄປສູ່ຄວາມສຸກທີ່ແທ້ຈິງໄດ້
- ແບ່ງປັນພຣະກິດຕິຄຸນຂອງພຣະເຢຊູໃຫ້ແກ່ທຸກໆຄົນ
- ຂຍາຍການເຕີບໃຫຍ່, ເຮັດໃຫ້ຄວາມເຊື່ອມີຄວາມໝາຍ

## ແຜນການສິດສອນ

## ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ຖ້າພໍເປັນໄປໄດ້ໃຫ້ນັກຮຽນມີເຈັ້ຽບົດຮຽນແຕ່ລະຄົນ. ກ່ອນເຂົ້າຫ້ອງຮຽນໃຫ້ຄຣູຂຽນບອກນັກຮຽນວ່າອາທິດໃດຈະຮຽນບົດໃດ ຂຽນວັນທີບອກໄວ້.
   ຄຣູຈະຊອກຫາໜັງສືພິມທີ່ມີຫົວຂໍ້ໃນດ້ານສູນເສັຍ ຈະເປັນຢ່າງໃດກໍໄດ້ ເພື່ອຈະໄດ້ປະກອບສ່ວນໃນບົດຮຽນວັນນີ້.
   ບອກນັກຮຽນວ່າວັນນີ້ ຈະໄດ້ສຶກສາເຣື່ອງໂຢບ.

## ນຳພາສຶກສາພຣະຄັມພີ

ສເນີກ່ຽວກັບພຣະທັມໂຢບສັ້ນໆ ວ່າຈະເປັນໄປຢ່າງໃດ. "ພຣະເຈົ້າກັບຄວາມໂສກເສົ້າຂອງມະນຸດຊາດ" ເປັນຢ່າງໃດ. ຜູ້ທີ່ມີຄວາມຊອບທັມ, ເຊື່ອໃນສາສນາ ແຕ່ໄດ້ຮັບຄວາມໂສກເສົ້າ ຜົນນີ້ແມ່ນອອກມາຈາກສິ່ງໃດ.
ວາງຄຳຖາມ: ທຸກວັນນີ້ ທ່ານເຄີຍເຫັນບໍ່ ຜູ້ມີຄວາມເຊື່ອ ຊອບທັມ ກໍພົບກັບສິ່ງເຫລົ່ານີ້ເໝືອນກັນ? ຊີ້ໃສ່ກະດານ ຫລືໂປສເຕີ້ ໃຫ້ນັກຮຽນໄດ້ເຫັນ.

"ເວລາສິ່ງທີ່ຊົ່ວຮ້າຍເກີດຂຶ້ນກັບຄົນດີ"

**(1) ຊາຍຄົນນຶ່ງຊື່ຂອງເຂົາວ່າ ໂຢບ (1:1)**

**(2) ການທົດລອງ, ການທົດລອງ (1:6-2:10)**

2. ໃຫ້ນັກຮຽນອ່ານ ໂຢບ 1:1. ຖ້າທ່ານມີແຜນທີ່ ເມືອງ ອູຊ ຂໍໃຫ້ທ່ານນຳໄປດ້ວຍ ເພື່ອຈະໄດ້ສເນີໃຫ້ນັກຮຽນເຫັນວ່າດິນແດນອູຊຕັ້ງຢູ່ໃສ?

3. ຕາມຄວາມສມັກໃຈ ໃຫ້ຄົນນຶ່ງອ່ານ ໂຢບ 1:6-12. ຖາມນັກຮຽນວ່າ ໜ້າທີ່ຂອງມານຊາຕານມັນເຮັດຫຍັງແດ່? ເປັນຫຍັງຊາຕານຈຶ່ງໄປມີໜ້າທີ່ຢູ່ເທິງສວັນ? ຄຣູຈະອະທິບາຍໃຫ້ນັກຮຽນເຈົ້າໃຈ. (1:9) ໂຢບຢຳເກງພຣະເຈົ້າລາວໄດ້ຫຍັງແດ່? ໃຫ້ເບິ່ງໃນເຈັ້ຽບົດຮຽນ.

4. ໃຫ້ນັກຮຽນຕັ້ງໃຈຟັງ ກ່ຽວກັບການສູນເສັຍຂອງໂຢບ ໃຫ້ຜູ້ທີ່ອ່ານດັງອ່ານ. ໂຢບ 1:13-19 ແລ້ວໃຫ້ອີກຄົນນຶ່ງອ່ານ ໂຢບ 2:1-9. ຂຽນລົງໃນກະດານ ບັນຊີທີ່ໂຢບເສັຍຫາຍ. ໃຫ້ນັກຮຽນອີກຄົນນຶ່ງອ່ານ ບັນຊີທີເສັຽຫາຍນັ້ນ.

5. ອ່ານໂຢບ 1:20-22 ແລະອ່ານ 2:10 ເພື່ອສະແດງໃຫ້ເຫັນວ່າ ແມ່ນຈະເສັຍຫລາຍປານໃດໂຢບກໍຍັງຕັ້ງສະຕິໄດ້. ຖ້າເປັນທ່ານເດ ທ່ານຈະເຮັດຢ່າງໃດ?

<u>ຫມູນໃຈໃນການນຳໄປໃຊ້:</u>

6. ໃຫ້ໃຊ້ໃນເຈັ້ຍບົດຮຽນ, ອ່ານ, ນຳໃຊ້, ປະສົບການທີ່ໂຢບໄດ້ຮັບ ເພື່ອເຮົາຈະໄດ້ໃຊ້ໃນຊີວິດປະຈຳວັນຂອງເຮົາ. ເມື່ອໂຢບໃຊ້ວິທີການທີ່ຮັກພຣະເຈົ້າແລ້ວ ຜົນທີ່ຕາມມາກໍຄືພຣະເຈົ້າຊົງອວຍພຣະພອນລາວ.

7. ເຊີນໃຫ້ນັກຮຽນ ແບ່ງປັນປະສົບການໃນການສູນເສັຍ ແລະມີຄວາມໂສກເສົ້າ ຖ້າພໍເປັນໄປໄດ້ໃຫ້ບອກຊື່ນຳເພື່ອຈະໄດ້ອ້ອນວອນເພື່ອ.

8. ອ້ອນວອນປິດຫ້ອງຮຽນ ເພື່ອຈະຕຽມຕົວນະມັສການ.

*ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 2
# ທໍຣະມານເພາະຫຍັງກັນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ ບົດທີ 3

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢບ 2:11-3:26

**ຈຸດສຳຄັນຂອງບົດຮຽນນີ້:** ໃນຂະນະທີ່ຄົນທັງຫລາຍຍັງສົງສັຍໃນບັນຫາ, ມັນກໍເປັນການງ່າຍດາຍທີ່ສຸດທີ່ຈະນຳໄປສູ່ຄວາມຫລົ້ມເຫລວ ແລະຄຳຖາມທີ່ວ່າ "ເປັນຫຍັງ" ຈະຕິດຕາມມາຢ່າງວ່ອງໄວ.

**ຄຳຖາມເພື່ອສຳຣວດ:** ເວລາບັນຫາ ສຸມເຂົ້າມາໃນຊີວິດຂອງພວກເຮົາ ເຮົາຈະເຮັດຢ່າງໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຮົາໄດ້ເຫັນຄຸນຄ່າໃນການຕອບຮັບບັນຫາຂອງໂຢບ, ແລະຈະໄດ້ນຳໄປຫມູນໃຊ້ໃນເມື່ອຄາວຈຳເປັນ.

| ເນັ້ນຫນັກເຖິງການສຶກສາແລະການກະທຳ |
| --- |
| • ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະ ການປ່າວປະກາດດ້ວຍ<br>• ເສີມຂຍາຍການຈະເລີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ<br>• ຫມູນໃຈຄອບຄົວຄຣິສຕຽນໃຫ້ມີສຸຂພາບດີ |

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ເປັນຫຍັງ ຄຳຖາມວ່າ "ເປັນຫຍັງ" ຈຶ່ງເປັນທີ່ນິຍົມຊົມຊອບຂອງຄົນທັງຫລາຍແທ້. ຍົກຕົວຢ່າງຈັກສອງສາມອັນເພື່ອໃຫ້ນັກຮຽນເຂົ້າໃຈວ່າ ເປັນຫຍັງຄົນຈຶ່ງມັກໃຊ້ແທ້ໆ. (ເປັນຫຍັງເດືອນນີ້ງຈຶ່ງຍາວໄປເຖິງສາມສິບວັນ? ເງິນຂອງຂ້ອຍມັນບໍ່ເຖິງສາມສິບວັນ? ເປັນຫຍັງຫຍ້າຢູ່ໃກ້ງ ຮົ້ວມັນຈຶ່ງຂຽວງາມດີແທ້? ເປັນຫຍັງຂ້ອຍຈຶ່ງບໍ່ໄດ້ງານທີ່ດີກວ່ານີ້? ) ຫລັງຈາກທີ່ຫລາຍຄົນປະກອບສ່ວນແລ້ວ ຄຣູກໍຈະບອກວ່າ ໂຢບຄົນທີ່ຢູ່ໃນພຣະຄັມພີກໍຖາມຄຳຖາມນີ້ເຫມືອນກັນ.

   **ຊີ້ໃຫ້ເຫັນຫົວຂໍ້ບົດຮຽນ:** "ທໍຣະມານເພາະຫຍັງ" ຫລືວ່າ ເປັນຫຍັງຈຶ່ງທໍຣະມານ.

   (1) ການມາຢ້ຽມຢາມຂອງມິດສະຫາຍ (2:11-13)

   (2) ຜູ້ທີ່ມີຄວາມໂສກເສົ້າໄດ້ຈົ່ມທຸກອອກມາ (3:1-26)

### ນຳພາການສຶກສາພຣະຄັມພີ

2. ອ່ານພຣະທັມໂຢບ 2:11-13. ອະທິບາຍຫຍໍ້ໆ ກ່ຽວກັບການມາຢ້ຽມຢາມຂອງສະຫາຍຂອງໂຢບ. ພວກເຂົາພາກັນມາຢາມນັ້ນເປັນການເລີ້ມຕົ້ນທີ່ດີແລ້ວ. ພວກເຂົາຊອກຫາທາງທີ່ຈະແບ່ງເບົາພາຣະຄວາມຣະທົມຂົມຂື່ນຂອງເພື່ອນຂອງເຂົາ. ພວກເຂົາພາກັນນັ່ງມິດຢູ່ ແມ່ນວິທີທີ່ດີຫລາຍທີ່ສຸດ . ພວກເຂົາໂສກເສົ້າ ເພາະເພື່ອນຂອງເຂົາໂສກເສົ້າ.

3. ບາດກ້າວຕໍ່ໄປ ຕຽມນັກຮຽນວ່າຜູ້ໃດຈະອ່ານຕອນໃດ ອ່ານໂຢບ 3:1-10; 3:11-19; 3:20-26.
ຂຽນ ຄຳຖາມນີ້ເທິງໃນກະດານ:

(1) ເປັນຫຍັງ ຂ້ອຍຈຶ່ງເກີດມາ?

(2) ເປັນຫຍັງ ຂ້ອຍຈຶ່ງບໍ່ຕາຍແຕ່ຍັງໜຸ່ມ?

(3) ເປັນຫຍັງຂ້ອຍຈຶ່ງບໍ່ຕາຍດຽວນີ້?

4. ຄົນນຶ່ງອ່ານ ໂຢບ 3:1-9 ເມື່ອມາເຖິງຕອນໂຢບວາງຄຳຖາມວ່າ ເປັນຫຍັງຂ້ອຍຈຶ່ງເກີດມາ? ໃຫ້ຄຣູຢຸດນັກຮຽນ ແລ້ວກໍອະທິບາຍ. ປ່ອຍໃຫ້ນັກຮຽນມີໂອກາດໄດ້ໃຫ້ຄວາມຄິດເຫັນໄປນຳ. ເຮັດຢ່າງນີ້ໄປເວລາພົບຄຳຖາມແລ້ວ ໃຫ້ຢຸດ ແລະສົນທະນາໄປດ້ວຍຈົນສຸດການອ່ານ. ຖ້ານັກຮຽນຫາກເວົ້າຍາວເກີນໄປກໍຈົ່ງແຊກເຂົ້າໄປແລ້ວກໍປ່ຽນ ໃຫ້ຄົນອື່ນໃຫ້ຄວາມຄິດເຫັນດ້ວຍ.

<u>**ໜູນໃຈໃຫ້ມີການກະທຳ:**</u>

5. ໜູນໃຈໃຫ້ນັກຮຽນຕອບຄຳຖາມ 1 ແລະ 3 ໃນເຈັ້ຍ ບົດຮຽນ. ໃຫ້ຕອບ ແລະໃຫ້ອະທິບາຍ ເພາະບົດຮຽນເປັນ ບົດຮຽນ ປະສົບການແກ່ຊີວິດ ແຕ່ລະຄົນຈະບໍ່ຄືກັນ.
ບາງຄົນກໍຈະເຄີຍຜ່ານສົງຄາມມາ
ບາງຄົນກໍຈະເຄີຍຜ່ານນ້ຳຖ້ວມ
ບາງຄົນກໍເຄີຍຜ່ານ ໄຟໄໝ້
ບາງຄົນກໍອາດຈະຜ່ານການສູນເສັຍຄອບຄົວ.......

6. ໃຫ້ນັກຮຽນຕອບຄຳຖາມ 4 ແລະ 5 ໃນເຈັ້ຍບົດຮຽນ

7. ຖ້າຍັງມີເວລາໃຫ້ນັກຮຽນ ຍົກຕົວຢ່າງຄົນທີ່ຮັ່ງມີ ແລະຍັງມີຄວາມໂສກເສົ້າຢູ່. ຈະເຮັດຢ່າງໃດຈຶ່ງຈະເປັນພະ ຍານແກ່ພວກນີ້ໄດ້.

*ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 3
# ຜູ້ຊ່ວຍບໍ່ຍອມຊ່ວຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ 4:1-9; 8:1-6; 11:1-6, 13-15

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢບ 2:11-13; 4:1--11:20

**ຈຸດສຳຄັນຂອງບົດຮຽນນີ້:** ຜູ້ຊ່ວຍຍິ່ງມາເພີ້ມເຕີມຄວາມໜັກໃຈ ໃຫ້ແກ່ຜູ່ທີ່ຢູ່ໃນຄວາມໂສກເສົ້າ

**ຄຳຖາມເພື່ອສຳຣວດ:** ແມ່ນຫຍັງຈະເກີດຂື້ນ ຖ້າຫາກຜູ້ທີ່ຈະມາຊ່ວຍ ຫາກມີແນວຄິດຕໍ່ສູ້ພຣະເຈົ້າຫລາຍກວ່າຢາກຊ່ວຍເຫລືອ

**ຈຸດປະສົງຂອງບົດຮຽນ:** ເພື່ອຈະຊີ້ໃຫ້ເຫັນຄວາມຜິດພາດຂອງສະຫາຍສາມຄົນຂອງໂຢບ ວ່າພວກເຂົາກຳລັງເພີ້ມຄວາມໂສກເສົ້າໃຫ້ແກ່ຜູ້ທີ່ໂສກເສົ້າ.

**ເນັ້ນໜັກເຖິງການສຶກສາແລະການກະທຳ**

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະ ການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ແບ່ງປັນພຣະກິດຕິຄຸນແກ່ທຸກໆຄົນ
- ເຊື່ອຟັງແລະຮັບໃຊ້ອົງພຣະເຢຊູ ບໍ່ວ່າຈະເປັນທາງຮ່າງກາຍ, ທາງຈິດວິນຍານ ແລະທາງຄວາມຮູ້ສຶກ
- ເສີມສ້າງທຸກຄົນໃຫ້ກາຍເປັນຜູ້ນຳທີ່ໃຊ້ການໄດ້

## ນຳເຂົ້າສູ່ຊີວິດຈິງ

1. ຄຣູຈະເລົ່າເຣື່ອງ ພາຍຸກາຕຣີນ້າ ທີ່ເກີດຂື້ນທີ່ຣັດລູຍຊີອານ້າ ໃນປີ 2006. ເປັນຫຍັງພຣະເຈົ້າຈຶ່ງນຳຄວາມຫາຍະນະມາສູ່ປະຊາຊົນຢ່າງນີ້. ເປັນຫຍັງຄວາມໂສກເສົ້າ ຄວາມຂົມຂື່ນຈຶ່ງຕົກມາສູ່ປະຊາຊົນເຮັດໃຫ້ພວກເຂົາມີການທໍຣະມານ ແລະກໍສົງສັຍພຣະເຈົ້າ. ເປັນເພາະຄວາມບາບຂອງພວກເຂົາບໍ່? ຫລືວ່າເປັນຍ້ອນຫຍັງ.

## ສຶກສາພຣະຄັມພີ

2. ປາຖະກະຖາສັ້ນໆ ໃຫ້ຢູ່ໃນ ໂຢບ 4--31. ບົດຮຽນຕອນນີ້ແມ່ນຈະເວົ້າເຣື່ອງມິດສະຫາຍຂອງໂຢບທັງສາມຄົນ. ແລະໃນບົດຮຽນໜ້າຈະເວົ້າເຣື່ອງການຮັບຜິດຊອບຂອງໂຢບ. ເມື່ອເບິ່ງຄືນ ໂຢບ 2:11-13 ຈະເຫັນວ່າເພື່ອນຂອງໂຢບພວກນີ້ເປັນຄົນດີຫລາຍ ເພາະເມື່ອໄດ້ຍິນຂ່າວວ່າ ເພື່ອນມີບັນຫາກໍຟ້າວມາຫາທັນທີ.
   ຂຽນລົງໃນກະດານຫລືໂປສເຕີ້ "**ຜູ້ຊ່ວຍບໍ່ຍອມຊ່ວຍ**"

   (1) ຜູ້ຊ່ວຍທີ່ມີຄວາມຮູ້ (2:11-13)

   (2) ບັນຫາຈາກການແນະນຳ (4:1-11:20)

3. ໃຫ້ຄົນນຶ່ງອ່ານ 4:1-9 ໃຫ້ໃຊ້ເຈັ້ຽບົດຮຽນ ແລ້ວຄຣູກໍຈະອະທິບາຍຫຍໍ້ໆ ພໍໃຫ້ນັກຮຽນເຂົ້າໃຈ. ເວົ້າຕາມຄຳເວົ້າ ຂອງ ເອລີຟັດ ແລ້ວວາງຄຳຖາມນັກຮຽນ ໃຫ້ນັກຮຽນຕອບແລະໃຫ້ຄຳຄິດຄຳເຫັນວ່າພວກເຂົາຮູ້ສຶກຢ່າງໃດໃນຄຳເວົ້າຢ່າງນັ້ນ.
ໃຫ້ເຮັດແບບເກົ່າກັບ ບີຣດັດ ແລະໂສຟາ. ຫລັງຈາກນັ້ນແລ້ວຄຣູກໍຈະວາງຄຳຖາມອອກມາ:

- ມິດສະຫາຍຂອງໂຢບ ທັງສາມ ມີສິ່ງໃດທີ່ພວກເຂົາເຮັດຄືກັນ?
- ເປັນຫຍັງພວກເຂົາຈຶ່ງຄິດວ່າ ຄວາມເວົ້າເຫລົ່ານີ້ຈະຊ່ວຍໂຢບໄດ້?
- ເປັນຫຍັງຈຶ່ງວ່າ ຄວາມເວົ້າຂອງເຂົາ ຊ່ວຍຫຍັງແກ່ໂຢບບໍ່ໄດ້ເລີຍ ?
- ຄວາມເວົ້າອັນໃດແດ່ທີ່ເປັນຄວາມຈິງ ພວກເຂົາເວົ້າອອກມາ?

4. ໃຫ້ເບິ່ງຄຳຖາມທີ 5 ໃນເຈັ້ຍບົດຮຽນ. ອະທິບາຍຫນ້ອຍນຶ່ງ ແລ້ວກໍໃຫ້ເບິ່ງໃນ ເພັງສັຣເສີນ ບົດທີ 8 ແລະບົດທີ 23

## <u>ຄຳຫນູນໃຈສຳລັບວັນນີ້:</u>

5. ຄຳຖາມໃນເຈັ້ຽບົດຮຽນ ຂໍ້ 2 ແລະ ຂໍ້ 3 ມີວິທີໃດທີ່ຈະຊ່ວຍບຸກຄົນທີ່ມີຄວາມໂສກເສົ້າ?

6. ໃຫ້ຊອກຫາວ່າວິທີໃດທີ່ຈະນຳພວກທີ່ມີຄວາມໂສກເສົ້າເຂົ້າມາຫາພຣະເຈົ້າໄດ້

7. ອະທິຖານປິດຫ້ອງຮຽນ ຕຽມຕົວເຂົ້າໃນການນະມັສການພຣະເຈົ້າ.

*ດຣ. ບຸນໂຮມ ພົມມະຈັນ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນທີ 4
# ລໍຖ້າການຊ່ວຍເຫລືອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ 16:1-8, 18-21; 19:1-7, 23-27

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ໂຢບ 16-17; 19

**ຈຸດສຳຄັນຂອງບົດຮຽນນີ້:** ເມື່ອມະນຸດໝູນໃຈແຕ່ກໍບໍ່ໄດ້ຜົນ, ພຣະເຈົ້າກໍຄືວ່າຢູ່ໃກແທ້ ແລະບັນຫາກໍຍັງໂຫມກະໜ່ຳຊີວິດຂອງເຮົາຢູ່, ເຮົາຕ້ອງຕັ້ງໝັ້ນຄົງຢູ່ກັບພຣະເຈົ້າ.

**ຄຳຖາມເພື່ອສຳຣວດ:** ຈະເຮັດຢ່າງໃດ ເມື່ອຮູ້ສຶກປ່ຽວພອຍ ແລະບໍ່ມີໃຜເປັນຫ່ວງເປັນໃຍໃນບັນຫາຂອງເຮົາ

**ຈຸດປະສົງຂອງບົດຮຽນ:** ເພື່ອຈະເຮັດໃຫ້ພວກເຮົາເຂົ້າໃຈໃນປະສົບການຂອງໂຢບກັບມິດສະຫາຍຂອງລາວແລະກັບພຣະເຈົ້າ ແລະພິຈາຣະນາເຖິງຄວາມຫວັງໃນພຣະເຈົ້າ ແມ່ນວ່າເຮົາຈະຕ່ຳພຽງໃດກໍຕາມ

## ເນັ້ນໜັກເຖິງການສຶກສາແລະການກະທຳ

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດ ໃນການນຳພາຊີວິດ ແລະການປ່າວປະກາດດ້ວຍ
- ເສີມຂຍາຍການຈເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ

## ແຜນການສິດສອນ

### ນຳເຣື່ອງເຂົ້າສູ່ຊີວິດຈິງ

1. ໃນກະດານ ໃຫ້ຂຽນ ລາຍການທີ່ສູນເສັຍໃຫຍ່ທີ່ສຸດລົງ. ໃຫ້ນັກຮຽນໃຫ້ຄຳຄິດເຫັນວ່າ ເຫດການເຫລົ່ານີ້ ມັນຈະເກີດຂຶ້ນໃນເວລາໃດ. ມິດສະຫາຍທັງສາມກໍໄດ້ໃຫ້ຄຳແນະນຳຜ່ານໄປ ແລະໂຢບເອັງກໍໄດ້ຕອບໄປດ້ວຍຄວາມຮັບຜິດຊອບ.

   ວັນນີ້ພວກເຮົາຈະມາສຶກສາ "ການລໍຖ້າການຊ່ວຍເຫລືອ"

   (1) ເມື່ອການຊ່ວຍເຫລືອຫາກບໍ່ເກີດຂຶ້ນແລ້ວ (16:1-8,18-21)

   (2) ທວນຄືນຄວາມໂສກເສົ້າ (19:1-7)

   (3) ຄວາມຫວັງໃນການຊົງໄຖ່ (19: 23-27)

### ນຳພາສຶກສາພຣະທັມ

2. ອ່ານ ໂຢບ 16:1-8) ສເນີການອະທິບາຍສັ້ນໆ ກ່ຽວກັບຄຳແນະນຳຂອງມິດສະຫາຍຂອງໂຢບ ແລະອີງໃສ່ເຈົ້າບົດຮຽນ. ສາສນາສາດທີ່ນຳເອົາມາໃຊ້ແບບຜິດໆ ໂຢບກໍໄດ້ໂຕ້ອອກໄປ ໃນ 16:7-8 ລາວບອກວ່າ ເພື່ອນຝູງຂອງລາວກໍປະລະລາວໄປໝົດ.

3. ໃນບົດ 16:18-21. ຫລັງຈາກທີ່ອ່ານແລ້ວ ໃຫ້ນັກຮຽນໃຫ້ຄຳຄິດຄຳເຫັນ ວ່າໂຢບຍັງມີຄວາມຫວັງຢູ່ບໍ່ ຫລືວ່າ

ລາວບໍ່ມີຄວາມຫວັງຫຍັງຫມົດ. ໃຫ້ເບິ່ງໃນເຈັ້ຍບົດຮຽນ.

4. ອ່ານແລະສລູບ ໂຢບ 19:1-7 ຊີ້ໃຫ້ເຫັນວ່າໂຢບ ມີຄວາມບໍ່ພໍໃຈທີ່ສຸດໃນຄຳແນະນຳຂອງເພື່ອນຝູງນັ້ນແລະເວລາຮ້ອງຫາພຣະເຈົ້າກໍບໍ່ໄດ້ຮັບຄຳຕອບ. ຄຳຖາມ: ເປັນຫຍັງພຣະເຈົ້າຈຶ່ງບໍ່ຕອບຄຳອະທິຖານຂອງເຮົາທັນທີທັນໃດໂລດ?

5. ໂຢບ 17:23-27 ໂດຍໃຊ້ໂຢບ 19:23-24 ອະທິບາຍເຖິງຄວາມປາຖນາຂອງໂຢບ ວ່າລາວຕ້ອງການຢ່າງໃດ? ພວກເຮົາຢາກໃຫ້ປະສົບການນີ້ ຜ່ານໄປເຖິງອີກຊົ່ວເຊັ່ນຄົນບໍ່?
"ການຊີ່ງໄຖ່ແມ່ນຫຍັງ?" ເບິ່ງໃນເຈັ້ຍບົດຮຽນ ອະທິບາຍເຖິງຄວາມຫວັງຂອງໂຢບແບບຫຍໍ້ງ ຄຣິສຕຽນເຮົາເດ ໃນການຊີ່ງໄຖ່ນີ້ ພວກເຮົາມີຄວາມຫວັງຫຍັງບໍ່?

## <u>ນຳໃຊ້ໃນຊີວິດປະຈຳວັນ</u>

6. ຫນູນໃຈໃຫ້ນັກຮຽນເບິ່ງໃນເຈັ້ຍບົດຮຽນ ໃນຕອນທີ່ວ່າ <u>ແນະນຳເຂົ້າໃນບົດຮຽນ</u> ແລ້ວໃຫ້ນັກຮຽນຕອບຄຳຖາມທີ 3 ແລະ ທີ 4

7. "ຈົ່ງຊ່ວຍເຫລືອ ຜູ້ທີ່ຕ້ອງການການຊ່ວຍເຫລືອ" ໃຫ້ນັກຮຽນຊ່ວຍຊອກຫາວ່າ ໃນສັງຄົມລາວແລະໄທຂອງພວກເຮົາມີໃຜແດ່ທີ່ຄົງຍັງຕ້ອງການ ໆຊ່ວຍເຫລືອຢູ່.

8. ອ້ອນວອນອະທິຖານ ເພື່ອການຊົງນຳໃນການນະມັສການ.

*ດຣ. ບຸນໂຮມ ພົມມະຈັນ*

# ບົດແນະນຳຄູສອນ
# ບົດຮຽນທີ 5
# ທ່ານຄິດວ່າທ່ານແມ່ນໃຜກັນແທ້?

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ໂຢບ 38:1-21, 40:1-2

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ໂຢບ 38:1-40:2

**ຈຸດສຳຄັນຂອງບົດຮຽນນີ້:** ມະນຸດຊາດມັກໃຫ້ພຣະເຈົ້າເຮັດຕາມຄວາມນຶກຄິດຂອງຕົນ.

**ຄຳຖາມເພື່ອການສຳຣວດ:** ພວກເຮົາມີຄວາມຮູ້ ແລະຄວາມສາມາດຈຳກັດ, ເຮັດແນວໃດພວກເຮົາຈຶ່ງມີຄວາມສຳພັນກັບພຣະເຈົ້າໄດ້?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອສລູບຄຳສອນຂອງພຣະເຈົ້າເຖິງເຣື່ອງສຳຄັນທີ່ສຸດ ແລະ ເອົາມາໃຊ້ໃນຊີວິດຂອງພວກເຮົາ.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ ແລະໃນການຮັບໃຊ້.
- ເສີມຂຍາຍຕົວໃຫ້ໃຫຍ່ຂຶ້ນ ແລະໃຫ້ຄວາມເຊື່ອມີຊີວິດຊີວາ.

**ບົດນຳວິທີສອນ**

ບົດຮຽນນີ້ເປັນເຣື່ອງຂອງທ່ານໂຢບທີ່ໄດ້ສູນເສັຽສິ່ງຂອງ, ຄອບຄົວ, ແລະມີຄວາມທຸກທໍຣະມານແສນສາຫັດ. ເພື່ອນຮັກກໍພະຍາຍາມມາໃຫ້ກຳລັງໃຈ ແຕ່ໃຫ້ຄຳແນະນຳຜິດ ເພາະທ່ານໂຢບເອງເປັນຄົນບໍ່ມີຄວາມຜິດ, ແຕ່ເຖິງປານນັ້ນທ່ານໂຢບກໍຍັງເປັນມະນຸດ ຈຶ່ງກ້າຖາມເຖິງເຫດຜົນກັບພຣະເຈົ້າທີ່ເພິ່ນໄດ້ຮັບປຣາຊັຍໃນຊີວິດນັ້ນວ່າເປັນການບໍ່ຍຸດຕິທັມເລີຍ. ໂດຍຄວາມອົດທົນໃນທີ່ສຸດທ່ານໂຢບກໍໄດ້ພົບກັບເຈົ້າຂອງຜູ້ມີພຣະປັນຍາເລີດ ແລະພຣະອົງຕອບເຖິງສິ່ງທີ່ເພິ່ນມີຄວາມຂ້ອງໃຈ ແລະໄດ້ອວຍພຣະພອນແກ່ເພິ່ນຫລາຍກວ່າຄວາມສູນເສັຽໃນຊີວິດ.

## 1. ການບໍ່ອົດທົນຂອງຄົນໜຸ່ມ (32:1-37:24)

ກ. ຜູ້ເປັນຄຣູສອນໃຊ້ເວລາອ່ານພຣະຄັມພີຂ້າງເທິງນີ້ໃຫ້ຈົບ.

ຂ. ໃຫ້ອ່ານຕັ້ງແຕ່ບົດ 32:1-37:24 ໃຫ້ຈົບພ້ອມກັນບາດດຽວເພື່ອຈະມີຄວາມຈຳດີ.

ຄ. ຂຽນໃສ່ກະດານເຖິງວິທີຕ່າງໆທີ່ມະນຸດເຮົາໄດ້ຍິນຈາກພຣະເຈົ້າ ຫລືວິທີທີ່ພຣະເຈົ້າເວົ້າກັບມະນຸດ.

ຄ. ໃຫ້ຊອກເອົາພະຍານສ່ວນຕົວ ຫລືເອົາຂອງຄົນອື່ນມາປະກອບເວົ້າເຖິງຄວາມບໍ່ອົດທົນຂອງຄົນໜຸ່ມ.

ງ. ຄົ້ນຫາວ່າ ເອເລຣູແມ່ນໃຜກັນແທ້? ມີຫຍັງແດ່ທີ່ພວກເຮົາສາມາດເອົາມາປະກອບສ່ວນໃຊ້ໃນຊີວິດເຮົາໃນທຸກມື້ນີ້.

## 2. ທີ່ສຸດພຣະເຈົ້າໄດ້ກ່າວ (38:1-21)

ກ. ອ່ານ ຂໍ້ 1-4 ບອກວ່າໃຜເປັນຄົນເວົ້າ?

ຂ. ຊອກເອົາຜູ້ສມັກສອງສາມຄົນອ່ານ ແລະບອກໃຫ້ເຂົາຊ່ອຍປະກອບຕາມຄຳແນະນຳ.

ຄ. ຂໍ້ 4-7 ໃຫ້ເວົ້າເຖິງຄວາມໝາຍ. ເອົາເຈັ້ຽມາຕັດຫລືແຕ້ມໃຫ້ຄົນເຂົ້າໃຈ.

ງ. ຂໍ້ 8-11 ໃຫ້ຊອກເອົາເພງ ຫລືບົດກາບກອນທີ່ເວົ້າເຖິງເຣື່ອງນີ້ມາເປີດໃຫ້ຟັງ.

ຈ. ຂໍ້ 12-15 ໃຫ້ບອກວ່ານາຍທະຫານມີສິດທີຈະສັ່ງໃຫ້ທະຫານຟັງຄວາມ.

ສ. ຂໍ້ 16-18 ບອກວ່າໃນໂລກນີ້ບໍ່ມີຜູ້ໃດເຂົ້າໃຈໃນທຸກສິ່ງ.

ຊ. ຂໍ້ 19-21 ຄວາມມືດ ແລະຄວາມສະຫວ່າງແຕກຕ່າງກັນ ໂດຍໃຫ້ຄົນປິດເປີດໄຟ.

**3. <u>ພຣະເຈົ້າທ້າທາຍໂດຍຕົງ</u> (40:1-2)**

ກ. ຕັ້ງຄຳຖາມຂຶ້ນວ່າ, ຜູ້ຊອກຫາຄວາມຜິດມີສິດທີທີ່ຈະຕໍ່ວ່າກັບພຣະເຈົ້າຜູ້ຊົງຣິດ?

ຂ. ນຳພາຫ້ອງຮຽນໃຫ້ເຂົ້າໃຈທີ່ນັກປາດດ້ານສາສນາ ແລະນັກການເມືອງພະຍາຍາມຕອບຄຳຖາມໃນຊີວິດທີ່ສັບສົນນີ້ຢ່າງໃດ?

ຄ. ອະທິບາຍວ່າພຣະເຈົ້າບໍ່ໄດ້ຕອບຄຳຖາມຂອງທ່ານໂຢບແບບງ່າຍໆ ແຕ່ພຣະອົງທ້າທາຍໃຫ້ທ່ານໂຢບມິດຟັງເພື່ອຈະໄດ້ຍິນດີ.

<u>ຄຳຖາມ:</u>

1. ມີເວລາໃດບໍ່ທີ່ທ່ານຄິດວ່າພຣະເຈົ້າມິດສງັດໃນຊີວິດຂອງທ່ານ? ແມ່ນຫຍັງເກີດຂຶ້ນກັບທ່ານໃນເວລານັ້ນ? ຈາກຄວາມສງັດນັ້ນ ທ່ານມີຄວາມຮູ້ສຶກຢ່າງໃດ?
2. ຄິດເຖິງປະສົບການທີ່ທ່ານໄດ້ຮຽນຮູ້ເຖິງລັກສະນະຂອງພຣະເຈົ້າ. ມີອັນໃດເປັນສິ່ງແປກໃຈໃນເມື່ອທ່ານໄດ້ເຫັນຮູບພາບນັ້ນແຈ້ງຂຶ້ນເພາະພຣະເຈົ້າຜູ້ທີ່ທ່ານນະມັສການໃຫ້ທ່ານໄດ້ຮູ້ໄດ້ເຫັນຄັກດີ?
3. ມີບົດຮຽນໃນຊີວິດເກີດຂຶ້ນບໍ່? ໃນເມື່ອທ່ານໄດ້ເຫັນ ເອເລຮູ ທ້າທາຍໂຢບແລະເພື່ອນເກົ່າຂອງລາວ? ປະສົບການເຫລົ່ານີ້ໄດ້ສອນທ່ານຫຍັງແດ່ຕໍ່ຜູ້ປະສົບກັບຄວາມລຳບາກໃນຊີວິດ?
4. ປະວັດຫລາຍເຣື່ອງໃນພຣະຄັມພີໄດ້ບອກເຖິງຄວາມຍິ່ງໃຫຍ່ຂອງພຣະເຈົ້າ. ທ່ານສາມາດບອກອັນນຶ່ງໄດ້ບໍ່? ໃຫ້ທວນຄິດຄືນຫລັງເຖິງບາງຢ່າງທີ່ຊ່ອຍທ່ານໃຫ້ມອງເຫັນຄວາມຍິ່ງໃຫຍ່ຂອງອົງພຣະຜູ້ເປັນເຈົ້າ?

*ດຣ. ບຸນ ວົງສຸຣິດທ໌*

# ບົດແນະນໍາຄຣູສອນ
# ບົດຮຽນທີ 6
# ມີຄວາມເຊື່ອແລະຄວາມຫວັງທັງໆທີ່ເຮົາບໍ່ເຂົ້າໃຈ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ໂຢບ 40:3-9,42:1-12

**ຂໍ້ພຣະຄັມທັງຫມົດສໍາລັບບົດຮຽນນີ້:** ໂຢບ 40:3-9,42:6

**ຈຸດສໍາຄັນຂອງບົດຮຽນນີ້:** ພວກເຮົາຍັງມີຄວາມເຊື່ອແລະຄວາມຫວັງທັງໆທີ່ຍັງບໍ່ເຂົ້າໃຈ ດີເຖິງວ່າຄວາມທຸກທໍຣະມານມາຈາກໃສ.

**ຄໍາຖາມເພື່ອການສໍາຣວດ:** ອັນໃດສໍາຄັນກວ່າກັນ-ທີ່ຈະຮູ້ວ່າຄວາມທຸກມາຈາກໃສ ຫລື ຮູ້ວ່າພຣະເຈົ້າຈະຫາມາໃຫ້ແກ່ເຮົາ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະນໍາພາຜູ້ຮຽນໃຫ້ເອົາການຕອບສນອງຂອງທ່ານໂຢບ ມາໃຊ້ ແລະໃຫ້ຮູ້ວ່າພຣະເຈົ້າໄດ້ຈັດຫາມາໃຫ້ທ່ານໂຢບ.

**ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ຢືນຢັນວ່າພຣະຄັມພີເປັນພຣະກໍາລັງອໍານາດທີ່ຈະຊີ້ນໍາພາໃນຊີວິດ ແລະການຮັບໃຊ້.
- ເສີມຂຍາຍຕົວໃຫ້ໃຫຍ່ຂື້ນ ແລະໃຫ້ຄວາມເຊື່ອມີຊີວິດຊີວາ.

## ແນະນໍາວິທີສອນ

ການທ້າທາຍຂອງພຣະເຈົ້າຕໍ່ຜູ້ຮັບໃຊ້ຜູ້ໄດ້ຮັບຄວາມທຸກທໍຣະມານຄືທ່ານໂຢບ ເປັນເຫດໃຫ້ຄົ້ນພົບເຫັນຄວາມຫວັງໃຈ, ການປິ່ນປົວໃຫ້ດີພະຍາດ, ແລະການຄືນດີກັບພຣະເຈົ້າ. ທ່ານໂຢບໄດ້ເຫັນວ່າພຣະເຈົ້າໄດ້ໃຊ້ຄໍາຖາມທີ່ຍາກຫລາຍຄື ພຣະເຈົ້າໄດ້ຍົກເອົາເຣື່ອງທີ່ຈະເວົ້າແລະພຣະອົງເປັນຜູ້ສລຸບ. ພຣະປະສົງຂອງພຣະເຈົ້າທີ່ຍອມໃຫ້ທ່ານໂຢບໄດ້ປະສົບກັບຄວາມລໍາບາກນັ້ນບໍ່ແມ່ນເພື່ອຈະທໍາລາຍ ແຕ່ເພື່ອໃຫ້ລາວມີຄວາມເຂົ້າໃຈກວ້າງໄກ ແລະມີຄວາມເຊື່ອໃນການມີຊີວິດຢູ່.

ກ່ອນອື່ນໝົດການທີ່ພຣະເຈົ້າໄດ້ຖາມເປັນເຣື່ອງຍືດຍາວ (ໂຢບ 38:1-40:2). ພຣະເຈົ້າໄດ້ບອກເຖິງພຣະປັນຍາ ແລະອໍານາດຂອງພຣະອົງໃນການຊົງສ້າງ-ພຣະອົງເປັນຜູ້ບັງຄັບບັນຊາໃນສິ່ງຊົງສ້າງຂື້ນມາ. ໃນການທຸກທໍຣະມານຢ່າງແສນສາຫັດ, ໂຢບໄດ້ເປີດຄະດີຕໍ່ພຣະເຈົ້າຫວັງວ່າພຣະອົງຈະໄດ້ຕອບຄວາມຕໍ່ວ່າຂອງຕົນ. ໃນເມື່ອຮູ້ຈັກພະລັງອໍານາດ ແລະພຣະປັນຍາຂອງພຣະເຈົ້າ ທ່ານໂຢບກາຍເປັນຄົນມິດສງັດຟັງ.

ສອງ, ການສົນທະນາສັກສິດ (40:6-41:34) ໄດ້ເວົ້າເຖິງຄວາມທ່ຽງທັມຂອງພຣະເຈົ້າຕໍ່ການຊົງສ້າງໂດຍອໍານາດອັນຍິ່ງໃຫຍ່. ທ່ານໂຢບບໍ່ເປັນພຽງແຕ່ມິດສງັດຟັງ ລາວໄດ້ສາຣະພາບບາບໝົດສິ້ນ. ແຕ່ຢ່າງໃດກໍຕາມພຣະເຈົ້າບໍ່ໄດ້ຕອບເຖິງເຫດຜົນທີ່ທ່ານໂຢບໄດ້ຮັບຄວາມທຸກທໍຣະມານເລີຍ. ທໍາອິດທ່ານໂຢບກໍມີຄວາມນ້ອຍເນື້ອຕໍ່າໃຈ ແຕ່ໃນເວລາສຸດທ້າຍຄວາມຄິດຢ່າງນັ້ນບໍ່ເປັນສິ່ງສໍາຄັນຕໍ່ທ່ານໂຢບ. ຜ່ານທາງປະສົບການເຖິງຄວາມເປັນຈິງຂອງພຣະເຈົ້າ, ພຣະປັນຍາ, ແລະພຣະລັງອໍານາດຂອງພຣະເຈົ້າ ທ່ານໂຢບມີຊີວິດຢູ່ດ້ວຍຄວາມເຊື່ອໂດຍທີ່ຍັງບໍ່ເຂົ້າໃຈເຖິງເຫດຜົນທີ່ຕົນເອງໄດ້ຮັບ-ມັນກາຍເປັນປີສນາໃນຊີວິດຕລອດໄປ.

ຈຸດສຳຄັນໃນເຣື່ອງນີ້ມາຈາກສອງບ່ອນຄື ບົດສຸດທ້າຍທີ່ເປັນກາບກອນ ແລະບົດສລູບຜົນທີ່ເປັນການສົນທະນາ. ຕອນສອງນີ້ໄດ້ມີຄຳຖາມຍາກເກີດຂຶ້ນ. ເຣື່ອງລາວໄດ້ຈົບລົງໂດຍທີ່ວ່າພຣະເຈົ້າທ່ຽງທັມ ແລະທ່ານໂຢບມີຄວາມເຊື່ອໝັ້ນໃນພຣະເຈົ້າ. ຢ່າງໃດກໍດີຄວາມທຸກທໍຣະມານໃນຊີວິດພຣະເຈົ້າບໍ່ໄດ້ບອກວ່າເປັນດ້ວຍເຫດໃດ ແລະກໍບໍ່ໄດ້ບອກວ່າມະນຸດເຮົາໄດ້ມີຄວາມທຸກນັ້ນເປັນເພາະເຫດໃດ. ຫລາຍຄົນກໍບໍ່ມີຊີວິດມີຄວາມສຸກໃນເວລາສຸດທ້າຍເໝືອນປະວັດຂອງທ່ານໂຢບ. ເພື່ອນທີ່ແນະນຳໃຫ້ທ່ານໂຢບໃຫ້ເຮັດຫລາຍຢ່າງ ໃນທີ່ສຸດກໍໄດ້ປະເຊີນກັບພຣະເຈົ້າຜູ້ຖາມເຂົາຫລາຍໆຢ່າງ ແລະໄດ້ຮູ້ເຖິງຄວາມເປັນທັມຂອງພຣະເຈົ້າ. ທີ່ສຸດທ່ານໂຢບກໍມີໂອກາດໄດ້ອ້ອນວອນເພື່ອເພື່ອນຂອງຕົນຜູ້ອ້າງວ່າເປັນຜູ້ສລາດ ແລະມີປັນຍາເຖິງເຣື່ອງພຣະເຈົ້າ. ແນ່ນອນ ທ່ານໂຢບໄດ້ຮັບພຣະພອນຫລາຍກວ່າຄວາມທຸກທໍຣະມານທີ່ຕົນເອງໄດ້ຮັບ.

ໃຫ້ອ່ານຄຳອະທິບາຍພຣະຄັມພີຕາມຂ້າງລຸ່ມນີ້ເພື່ອທ່ານຈະສາມາດເຂົ້າໃຈດີໃນປະວັດເບື້ອງຫລັງ. ກ່ອນສອນທ່ານຄວນອ່ານບົດສອນນີ້ໃຫ້ໝົດຫລາຍເທື່ອ.

1. ການຕອບສນອງຂອງທ່ານໂຢບຕໍ່ພຣະເຈົ້າ (40:3-5). ທ່ານມີຄວາມຄິດແນວໃດກັບຄວາມເຂົ້າໃຈເກົ່າໆກ່ຽວກັບພຣະເຈົ້າ? ເປັນດ້ວຍເຫດໃດທ່ານໂຢບຈິ່ງປ່ຽນໃຈຕໍ່ວ່າກັບພຣະເຈົ້າ?

2. ການທ້າທາຍທີ່ຢຳເກງພຣະເຈົ້າ (40:6-9) ມີອັນໃດຈະເອົາເປັນຕົວຢ່າງໃນເມື່ອພວກເຮົາໄດ້ຕໍ່ວ່າພຣະເຈົ້າເຖິງວິທີທາງຂອງພຣະອົງ?

3. ການສາຣະພາບໂດຍຄວາມເຊື່ອ (42:1-6) ທ່ານຈະໃຊ້ຄຳເວົ້າແນວໃດອະທິບາຍເຖິງຄວາມຮູ້ສຶກເຖິງພະລັງແລະອຳນາດຂອງພຣະເຈົ້າ?

4. ຂອງຂວັນອັນໃຫຍ່ກວ່າ (42: 7-12) ເປັນຫຍັງໃນປະວັດຂອງທ່ານໂຢບຈະໃຫ້ຄົນເຂົ້າໃຈວ່າໃນຕອນສຸດທ້າຍພຣະເຈົ້າຈະໄດ້ອວຍພຣະພອນຍ້ອນຄວາມເຊື່ອໝັ້ນຂອງຜູ້ທີ່ຕິດຕາມພຣະເຈົ້າຢ່າງສຸດຊີວິດ?

## ການແປແລະອະທິບາຍພຣະຄັມພີ

### 1. <u>ການຕອບສນອງຂອງທ່ານໂຢບຕໍ່ພຣະເຈົ້າ</u> (40:3-5)

<u>40:3.</u> ການປະສົບກັບການເລິກລັບຂອງຊີວິດເປັນເຫດໃຫ້ເຮົາໄດ້ຮູ້ຈັກວ່າເຮົາເອງບໍ່ຮູ້ ແລະບໍ່ສາມາດອະທິບາຍໄດ້. ເຖິງແມ່ນວ່າທ່ານໂຢບມີຄວາມກ້າຫານທີ່ບອກເຣື່ອງຂອງຕົນເອງຕໍ່ພຣະເຈົ້າ ເພື່ອໃຫ້ພຣະອົງຕອບວ່າເປັນຫຍັງຊີວິດຈິ່ງເປັນຢ່າງນີ້, ແຕ່ພຣະເຈົ້າບໍ່ໄດ້ຕອບຊຶ່ງເປັນການແປກໃຈ. ທຳອິດຄຳຖາມ ຫລືຄວາມຕໍ່ວ່າຕໍ່ພຣະເຈົ້າເປັນສິ່ງສົມຄວນ ແຕ່ຕໍ່ມາກໍເຫັນວ່າບໍ່ເປັນສິ່ງທີ່ສົມຄວນຈະຍົກມາຖາມເລີຍ.

<u>40:4-5.</u> ຄຳຖາມຂອງພຣະເຈົ້າເຮັດໃຫ້ທ່ານໂຢບເຫັນສະພາບໃໝ່ໃນການຊົງສ້າງວ່າພຣະເຈົ້າມີພະລັງອຳນາດອັນຍິ່ງໃຫຍ່. ຢ່າງແປກໃຈທ່ານໂຢບຍອມຮັບວ່າຕົນເອງເປັນ "ຜູ້ນ້ອຍ." ຕົນເປັນຄົນບໍ່ມີນ້ຳໜັກ, ແລະບໍ່ສຳຄັນຫຍັງ. ນັ້ນເປັນຄວາມຮູ້ສຶກຂອງມະນຸດໃນເມື່ອໄດ້ປະສົບກັບອົງພຣະຜູ້ເປັນເຈົ້າ. ປະສົບການຢ່າງນັ້ນເປັນເຫດໃຫ້ພວກເຮົາໄດ້ຍອມຕໍ່ພະລັງອັນຍິ່ງໃຫຍ່ ໃນພຣະພັກຂອງພຣະເຈົ້າ.

ທ່ານໂຢບຊອກຄໍາເວົ້າຈະມາອະທິບາຍເຖິງຄວາມຮູ້ສຶກຂອງຕົນເອງບໍ່ໄດ້ໃນເວລານີ້. ລາວໄດ້ກ່າວວ່າ ລາວຈະເປັນຄົນມິດສະງັດ. ແຕ່ກ່ອນລາວມີຄະດີຕໍ່ວ່າຕົນເອງເຮັດຫຍັງຜິດຈຶ່ງໄດ້ປະສົບກັບຄວາມທຸກທໍຣະມານ.

**2. ການທ້າທາຍທີ່ຢໍາເກງພຣະເຈົ້າ** (40:6-9)

40:6-9. ທ່ານໂຢບອາດຄິດວ່າການທີ່ມິດສງັດຟັງເປັນການຢຸດສົນທະນາກັບພຣະເຈົ້າ. ແຕ່ວ່າການທ້າທາຍກໍຍັງມີຕໍ່ໄປ, ພຣະເຈົ້າບໍ່ໄດ້ພໍພຣະທັຍພຽງແຕ່ທ່ານໂຢບມິດສງັດຟັງ, ພຣະເຈົ້າມີພຣະປະສົງໃຫ້ໂຢບສາຣະພາບບາບໃນຄວາມເຂົ້າໃຈຜິດຂອງຕົນເອງ ແລະຖວາຍຕົນຕໍ່ພຣະອົງ.

40:8. ທ່ານໂຢບໄດ້ຖາມເຖິງຄວາມເປັນທັມຂອງພຣະເຈົ້າ. ພຣະເຈົ້າໄດ້ຖາມເຖິງອຸປະນິດສັຍທີ່ທ່ານໂຢບຕໍ່ວ່າ. ໂຢບເຊື່ອວ່າຕົນເອງເປັນຄົນບໍຣິສຸດ ແລະພຣະເຈົ້າຈະອວຍພຣະພອນແກ່ຜູ້ບໍ່ມີຄວາມຜິດ. ທ່ານໂຢບໄດ້ຮັບຄວາມທໍຣະມານໂດຍທີ່ບໍ່ໄດ້ຮູ້ເຖິງເຫດຜົນ. ສລູບແລ້ວ ໂຢບເວົ້າວ່າພຣະເຈົ້າບໍ່ຍຸຕິທັມ.

40:9. ຄໍາເວົ້າ "ແຂນ" ເປັນຄໍາເວົ້າປຽບທຽບມີຄວາມໝາຍວ່າ ເປັນພະລັງ ຫລື ອໍານາດ. ພຣະເຈົ້າໄດ້ບອກກັບທ່ານໂຢບວ່າພຣະອົງມີອໍານາດເໝືອນສຽງມາຈາກລົມພະຍຸ. ທ່ານໂຢບເຮັດຢ່າງນັ້ນໄດ້ບໍ່? ພຣະເຈົ້າບອກກັບທ່ານໂຢບວ່າໃຫ້ລອງເປັນພຣະເຈົ້າ, ຜູ້ມີຄວາມຮັບຜິດຊອບຫລາຍກັບການຊົງສ້າງແລະໂຢບຈະເຂົ້າໃຈດີຂຶ້ນ.

**3. ການສາລະພາບໂດຍຄວາມເຊື່ອ** (42:1-6)

42:1-2. ທ່ານໂຢບບໍ່ມິດສງັດຟັງ ແລະພຣະເຈົ້າກໍໄດ້ເວົ້າຕໍ່ ຊຶ່ງເປັນການແຕກຕ່າງກັບອັນທີນຶ່ງທີ່ເວົ້າເຖິງພະລັງອໍານາດ ແລະພຣະສະຕິປັນຍາ. ໃນການຕອບຂອງພຣະເຈົ້າ, ທ່ານໂຢບລະອາຍຕໍ່ອໍານາດອັນຍິ່ງໃຫຍ່ ທີ່ຕົນເອງໄດ້ສັນຍາວ່າຈະມິດສງັດຟັງ. ຕອນນີ້ທ່ານໂຢບຍອມວ່າພຣະເຈົ້າມີອໍານາດ ແລະພຣະປະສົງອັນຖືກຕ້ອງ. ຍອມບໍ່ຕໍ່ວ່າອີກແລ້ວ.

42:3. ໂຢບໄດ້ອ້າງເຖິງຄໍາຖາມຂອງພຣະເຈົ້າແຕ່ເລີ້ມມາ. (38:2) ຊຶ່ງເປັນການລົບກວນຕົນເອງຕລອດມາ. ທ່ານໂຢບສາຣະພາບວ່າຕົນເອງຫາເຣື່ອງໃສ່ພຣະເຈົ້າເກີນຄວາມເຂົ້າໃຈຂອງຕົນເອງ, ແລະລາວຍອມວ່າລາວເຮັດໄປໂດຍ ທີ່ບໍ່ເຂົ້າໃຈເລີຍ. ຄິດວ່າຕົນເອງເປັນຜູ້ສລາດກໍເລີຍກາຍເປັນໂງ່. ພຣະເຈົ້າເວົ້າແຕ່ສິ່ງ "ມະຫັດສະຈັນທີ່ສຸດຕໍ່ຊີວິດ ຂອງຕົນ."

42:4-6. ໂຢບໄດ້ອ້າງເຖິງຄໍາຖາມຂອງພຣະເຈົ້າແຕ່ກ່ອນ (38:3,40:7). ການເຊື່ອຖືໃນສາສນາຂອງຕົນໄດ້ສະແດງໃຫ້ເຫັນວ່າຕົນເອງໄດ້ເຮັດຕາມທໍານຽມ. ໂຢບຍອມຮັບວ່າຄວາມເຊື່ອຂອງຕົນເອງບໍ່ຖືກຕ້ອງເພາະບໍ່ແມ່ນການປະສົບການກັບພຣະເຈົ້າເປັນທາງສ່ວນຕົວ. ຢ່າງໃດກໍດີ ໂຢບໄດ້ເໜັ້ນເຖິງຄວາມສໍາຄັນລະຫວ່າງການຮູ້ຈັກພຣະເຈົ້າ ແລະການປະສົບກັບພຣະອົງສ່ວນຕົວ.

**4. ຂອງຂວັນອັນໃຫຍ່ກວ່າ** (42: 7-12)

ການຂຽນໄດ້ປ່ຽນຈາກກາບກອນກາຍເປັນການສົນທະນາທີ່ເຫັນໃນບົດ ທີ 1-2. ເພື່ອນຂອງໂຢບໄດ້ເຂົ້າມາໃນພາບແລະພຣະເຈົ້າໄດ້ເວົ້າຕໍ່ພວກເຂົາ.

42: 7. ພຣະເຈົ້າໄດ້ເອົາຄະດີນຳເພື່ອນຂອງທ່ານໂຢບ ເພາະຄວາມແນະນຳຂອງພວກເຂົາຕໍ່ໂຢບ. ພວກເຂົາໄດ້ນຳຄະດີປ້ອງກັນຕົນເອງອີງຕາມທຳນຽມໃນການເຂົ້າໃຈເຣື່ອງພຣະເຈົ້າ ແລະເຂົາໄດ້ໃຫ້ຄຳແນະນຳຜິດຕໍ່ທ່ານໂຢບ.    ກົງກັນຂ້າມໂຢບໄດ້ສັດຊືຕໍ່ພຣະເຈົ້າແລະເພື່ອນຂອງຕົນ.   ພຣະເຈົ້າເອງກໍໄດ້ຍ້ອງຍໍກັບຄວາມສັດຊື່ຂອງໂຢບ ແລະໂຢບປາຖນາຢາກມີຄວາມສຳພັນອັນແທ້ຈິງກັບພຣະເຈົ້າ.

42:8-9. ຄວາມສຳພັນກັບມະນຸດເປັນຜົນສະທ້ອນກັບຄວາມສຳພັນກັບພຣະເຈົ້າໄດ້. ເພື່ອນຂອງໂຢບບໍ່ໄດ້ພຽງຢູ່ຫ່າງໄກຈາກພຣະເຈົ້າຍ້ອນຄຳແນະນຳຂອງເຂົາ, ແລະພວກເຂົາໄດ້ພົບກັບຄວາມໂກດຮ້າຍຂອງພຣະເຈົ້າ.        ພຣະເຈົ້າບອກເຂົາໃຫ້ສາລະພາບບາບ ແລະກັບຄືນດີກັບທ່ານໂຢບ. ພວກເຂົາຄວນຖວາຍບູຊາຕໍ່ພຣະເຈົ້າ ແລະພວກເຂົາຕ້ອງຂໍຮ້ອງໃຫ້ທ່ານໂຢບອ້ອນວອນເພື່ອ.  ໂຢບໄດ້ອ້ອນວອນເພື່ອພວກເຂົາ ແລະພຣະເຈົ້າກໍໄດ້ຮັບເອົາຄຳອ້ອນວອນນັ້ນ.

42:10-12. ໂຢບໄດ້ປະສົບກັບການຄືນດີກັບພຣະເຈົ້າ.  ມັນເປັນການຍາກທີ່ຈະອ້ອນວອນເພື່ອສັດຕຣູແລະເພື່ອນຮ້າຍ. ປະວັດໄດ້ສອນວ່າທ່ານໂຢບຈະບໍ່ໄດ້ພົບກັບພຣະພອນຢ່າງຄົບຖ້ວນ      ຖ້າໂຢບຍັງມີຄວາມຂັດໃຈກັບເພື່ອນຂອງຕົນ. ການຄືນດີຂອງທ່ານໂຢບປະກອບດ້ວຍຄວາມສຳພັນໃນຄອບຄົວແລະເພື່ອນ.  ທ່ານໂຢບໄດ້ສູນເສັຽລູກ  ສຸດທ້າຍໂຢບມີລູກອີກ 10 ຄົນ.  ປະວັດບໍ່ໄດ້ເວົ້າເຖິງຜູ້ເປັນເມັຽ.  ທ່ານໂຢບກໍໄດ້ຮັບຊີວິດຍືນຍາວອີກ 140 ປີກ່ອນລາວຕາຍ.

*ດຣ. ບຸນ ວົງສຸຣິດທ໌*

# ບົດແນະນຳຄຣູສອນ
# ບົດຮຽນທີ 7
# ຊີວິດບໍ່ໄປເຖິງໃສ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປັນຍາຈານ 1:1-11

**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ປັນຍາຈານ 1:1-11

**ຈຸດສຳຄັນຂອງບົດຮຽນນີ້:** ບາງຄັ້ງເຫັນວ່າຊີວິດບໍ່ມີຄວາມໝາຍຫຍັງເລີຍ, ບໍ່ມີຫຍັງດີ ຫລືຈຸດປະສົງ, ແລະບໍ່ໄປມາທາງໃດເລີຍ.

**ຄຳຖາມເພື່ອການສຳຣວດ:** ທ່ານເຄີຍມີຄວາມຮູ້ສຶກວ່າຊີວິດຂາດຄວາມໝາຍ ແລະບໍ່ໄປມາທາງໃດເລີຍ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຄຳນວນເຖິງຄຳສອນຂອງຄຣູທີ່ສອນວ່າຊີວິດນີ້ເຫັນວ່າບໍ່ໄປມາທາງໃດ ແລະເອົາປະກອບໃຊ້ໃນຊີວິດປະຈຳວັນນີ້

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ຢືນຢັນວ່າພຣະຄັທພີເປັນພະລັງອຳນາດທີ່ຈະຊີ້ນຳພາໃນຊີວິດ ແລະການຮັບໃຊ້.
- ແບ່ງປັນຂ່າວປະເສີດກັບທຸກໆຄົນ
- ເສີມຂຍາຍຕົວໃຫ້ໃຫຍ່ຂື້ນ ແລະໃຫ້ຄວາມເຊື່ອມີຊີວິດຊີວາ.

## ບົດແນະນຳໃນການສອນ

ບົດຮຽນນີ້ໄດ້ສອນໃຫ້ພວກເຮົາຮູ້ຈັກດີວ່າ ມີທຸກສິ່ງໃນຊີວິດ ແຕ່ບໍ່ຮູ້ຈັກກັບພຣະເຈົ້າເປັນຊີວິດທີ່ບໍ່ມີຄວາມໝາຍຫຍັງເລີຍ. ເວົ້າໄດ້ວ່າຊີວິດເປັນເໝືອນໄປຕາມລົມ ຖ້າບໍ່ມີພຣະເຈົ້າເປັນຜູ້ນຳພາ. ອາຈານສອນຜູ້ຍິ່ງໃຫຍ່ໄດ້ສອນວ່າທຸກຢ່າງເປັນສິ່ງອະນິຈັງ ຂາດຄວາມໝາຍ. ແຕ່ຖ້າມີພຣະເຈົ້າແລ້ວໃນຊີວິດກໍເທົ່າກັບວ່າເຮົາມີທຸກໆສິ່ງໂດຍບໍ່ໄດ້ຂາດອັນໃດ.

ຮຽນປະວັດເບື້ອງຫລັງໃຫ້ລະອຽດ. ຖາມຄຳຖາມດັ່ງຕໍ່ລົງໄປນີ້?

ກ. ຄຣູສອນແມ່ນໃຜ? ຂຽນໃຫ້ໃຜອ່ານ? ແລະມີຈຸດປະສົງຢ່າງໃດ?
ຂ. ເຫັນວ່າຊີວິດມີຄວາມໝາຍໄດ້ຢ່າງໃດ?
ຄ. 3000 ປີຕໍ່ມາປຶ້ມປັນຍາຈານນີ້ຍັງມີຄວາມສອນຕໍ່ຊີວິດຂອງເຮົາທຸກມື້ນີ້ໄດ້ຢ່າງໃດ?

## 1. ເບິ່ງກວ້າງໄກ (1:1-3)

ກ. ເຮັດແນວໃດຈິ່ງຈະຮູ້ວ່າຊີວິດມີຄວາມໝາຍ? ຮ້ອງຂໍໃຫ້ຄົນນິ່ງສມັກ ແລະຊ່ອຍອອກຄວາມເຫັນໃນເຣື່ອງນີ້?

ຂ. ໃຜເປັນຜູ້ຂຽນປຶ້ມປັນຍາຈານອີງຕາມປະວັດສາດ? ປຶ້ມນີ້ມີປໂຍດໃນການສຶກສາຢ່າງໃດຕໍ່ຊີວິດຂອງພວກເຮົາ

ໃນທຸກມື້ນີ້?

ຄ. ປື້ມພຣະຄັມພີເດີມແປຈາກພາສາເຮັບເຣີເປັນພາສາກຣີກນັ້ນມີຊື່ວ່າຢ່າງໃດ?

ງ. ຖາມວ່າຊີວິດທີ່ບໍ່ມີພຣະເຈົ້າເປັນຊີວິດຢ່າງໃດອີງຕາມຄຳສອນຂອງປື້ມປັນຍາຈານ?

ຈ. ຄຳຂວັນໃນປື້ມນີ້ແມ່ນຫຍັງ?

ສ. ຖາມວ່າຊີວິດເລີ້ມຕົ້ນແລະຊີວິດສຸດທ້າຍຂອງຜູ້ທີ່ເຊື່ອໄດ້ແຕກຕ່າງກັນຢ່າງໃດແດ່?

**2. <u>ທັມະຊາດໄດ້ເປີດເຜີຍເຣື່ອງພຣະເຈົ້າ ແລະສິ່ງບໍ່ມີຄວາມໝາຍ</u>** (1:4-9)

ກ. ທັມະຊາດທີ່ເຮົາເຫັນທຸກມື້ນີ້ໄດ້ສອນເຮົາຫຍັງແດ່?

ຂ. ເປັນຫຍັງໂລກຈິ່ງມີຊີວິດຍາວນານ ແຕ່ມະນຸດໄດ້ຕາຍໄປ?

ຄ. ພຣະເຢຊູໄດ້ເວົ້າເຖິງຄວາມງາມຂອງດອກບົວນັ້ນມີຄວາມໝາຍອັນໃດ?

**3. <u>ຄວາມຫວັງ ແລະຄວາມຜິດຫວັງ</u>** (1:10-11)

ກ. ຄຣູສອນໄດ້ບອກໃຫ້ເຮັດຢ່າງໃດເພື່ອຈະມີຊີວິດໃນເມື່ອປະສົບກັບຄວາມເສົ້າໂສກ?

ຂ. ການທີ່ຄຣູສອນໃນປື້ມປັນຍາຈານໄດ້ສຶກສາ ຄົ້ນພົບນີ້ສາມາດຊ່ວຍຫຍັງເຮົາໄດ້ແດ່?

ຄ. ເວລາໃດເຮົາສາມາດພົບເຫັນພຣະເຈົ້າໄດ້ດີ? ເວລາສະບາຍຫລືມີຄວາມທຸກ?

*ດຣ. ບຸນ ວົງສຸຣິດທ໌*

# ຄໍາແນະນໍາສໍາລັບຄຣູສອນ
# ບົດຮຽນບົດທີ 8
# ທຸກສິ່ງລ້ວນແຕ່ອະນິຈັງ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ປັນຍາຈານ 1:12--2:17, 22-23
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ປັນຍາຈານ 1:12--2:26
**ຈຸດສໍາຄັນຂອງບົດຮຽນນີ້:** ແມ່ນແຕ່ສິ່ງທີ່ຖືວ່າດີເລີດໃນຊີວິດມະນຸດ ກໍບໍ່ໄດ້ພຽງພໍທີ່ຈະນໍາຄຸນຄ່າ ແລະຄວາມພໍໃຈມາໃຫ້ກັບຕົວເອງ.
**ຄໍາຖາມເພື່ອການສໍາຣວດ:** ທຸກຢ່າງໃນຊີວິດຈະມີຄວາມໝາຍຫຍັງ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊີ້ໃຫ້ເຫັນວ່າ ຄວາມພຍາຍາມຂອງມະນຸດທີ່ຈະພົບຄວາມໝາຍໃນຊີວິດນັ້ນບໍ່ສໍາເຣັດ.

## ແຜນສໍາລັບການສອນ

**ນໍາເຣື່ອງສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ບອກພວກນັກຮຽນວ່າພວກເຂົາເຈົ້າເປັນຜູ້ສລາດທີ່ສຸດຢູ່ໃນຄຣິສຕະຈັກ ແລະມື້ນີ້ພວກເຂົາເຈົ້າກໍາລັງຈະສະແດງຄວາມສລາດຂອງຕົນໃຫ້ຄົນອື່ນຮູ້ໂດຍການຕອບຄໍາຖາມຕໍ່ໄປນີ້:
    - ເມືອງໃຫຍ່ທີ່ສຸດໃນຣັຖຂອງພວກເຮົາແມ່ນເມືອງໃດ?
    - ສນາມຟຸດບອນມີຄວາມຍາວຫລາຍປານໃດ? (100 ຢາດ ລະຫວ່າງຫລັກໂການ)
    - ໃຫ້ບອກຊື່ປື້ມພຣະທັມສັນຍາໃໝ່ສີ່ຫົວແລກ? (ມັດທາຍ, ມາຣະໂກ, ລູກາ, ໂຢຮັນ)
    - ພຣະເຢຊູບອກອັຄສາວົກຄົນໃດໃຫ້ຍ່າງເທິງໜ້ານໍ້າ? (ເປໂຕ)
    - ພຣະຄັມພີຫົວໃດເວົ້າເຣື່ອງພຣະເຈົ້າຊົງສ້າງໂລກ? (ປະຖົມການ)
    - ໃຜເປັນຜູ້ສລາດທີ່ສຸດໃນພຣະຄັມພີ? (ໂຊໂລໂມນ)

2. ຖາມນັກຮຽນວ່າ, "ທ່ານອາດຈະຮູ້ຄໍາຕອບທຸກຢ່າງ ແຕ່ຍັງບໍ່ຮູ້ຄໍາຕອບ" ມີຄວາມໝາຍວ່າຢ່າງໃດ? ບັລຍາຍວ່າຄຣູໃນພຣະທັມປັນຍາຈານຮູ້ຄໍາຕອບທຸກໆຢ່າງ ແລະມີຄວາມສຸກໃນຊີວິດຫລາຍ, ແຕ່ທ່ານຮູ້ສຶກຍັງບໍ່ສົມບູນແລະບໍ່ໝັ້ນຄົງ. ທ່ານເປັນຄົນທີ່ຮູ້ໝົດແຕ່ຊີວິດຍັງຫວ່າງເປົ່າແລະບໍ່ຄົບສົມບູນ.

**ນໍາພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

3. ພານັກຮຽນເບິ່ງໂປສເຕີ້ທີ່ໃຫ້ຫົວຂໍ້ໃຫຍ່ຂອງບົດຮຽນ ທີ່ທ່ານໄດ້ຈັດຕຽມໄວ້ຫລ່ວງໜ້າ. ອະທິບາຍຄໍາຖາມເພື່ອການສໍາຣວດໃນບົດຮຽນນີ້ທີ່ວ່າ, "ທຸກຢ່າງໃນຊີວິດຈະມີຄວາມໝາຍຫຍັງ?"

4. ແບ່ງກະດານເປັນສອງພາກເທົ່າໆກັນ; ໃສ່ຫົວຂໍ້ແລະຂໍ້ພຣະຄັມພີເພື່ອພິຈາຣະນາ. ປະວ່າງໄວ້ເພື່ອໃສ່ຄໍາຕອບ.

| ຄວາມລົ້ມເຫລວຂອງປັນຍາ (1:12-17) | ຄວາມລົ້ມເຫລວຂອງຄວາມສນຸກ (2:1-17, 22-23) |
|---|---|
| - | - |

5. ພານັກຮຽນພິຈາລະນາພຣະຄັມພີ ແລ້ວຊອກຫາຄວາມລົ້ມເຫລວຂອງປັນຍາວ່າມີຫຍັງແດ່ ໃນຂະນະທີ່ທ່ານອ່ານ 1:12-18 ໃຫ້ທຸກຄົນຟັງ. ໃຫ້ນັກຮຽນຂຽນໃສ່ກະດານສິ່ງທີ່ເຂົາເຈົ້າພົບ. (ຄຳຕອບຄື: ພາຣະໜັກ, ແລ່ນນຳລົມ, ຄວາມທຸກ, ຄວາມໂສກເສົ້າ)

6. ອ່ານ 1:18 ອີກເທື່ອນຶ່ງ ແລະຊີ້ໃຫ້ທຸກຄົນຮູ້ວ່າສິ່ງນີ້ຄືຄວາມຮູ້ສຶກຂອງຄຣູກ່ຽວກັບປັນຍາ. ປັນຍາສາມາດເພີ່ມປັນຫາ ດ້ວຍສິ່ງທີ່ບໍ່ມີຄວາມໝາຍ ແລະດ້ວຍຄວາມກັງວົນ. ເວລາພວກເຮົາຮູ້ຫລາຍ ພວກເຮົາຈຶ່ງຮູ້ວ່າຕົນເອງບໍ່ຮູ້ຫລາຍ! ໃຫ້ເວລາສົນທະນາຄວາມໝາຍຂອງຄຳເວົ້ານີ້.

7. ເຊັ່ນດຽວກັບຄຣູຜູ້ຂຽນປັນຍາຈານ ພວກເຮົາຈະຕ້ອງຍອມຮັບວ່າປັນຍາຂອງໂລກນີ້ເປັນເຣື່ອງໂງ່ສຳລັບພຣະເຈົ້າ. ເຊີນນັກຮຽນໃຫ້ພິຈາຣະນາເບິ່ງ "ເຣື່ອງຄວາມສຸກ" ໃນມັດທາຍ 5:3-5:
   - ຜູ້ໃດຍາກຈົນຝ່າຍຈິດວິນຍານກໍເປັນສຸກ ເພາະວ່າແຜ່ນດິນສວັນເປັນຂອງຜູ້ນັ້ນ.
   - ຜູ້ໃດໂສກເສົ້າກໍເປັນສຸກເພາະວ່າຜູ້ນັ້ນຈະໄດ້ຮັບການຊົງເລົ້າໂລມ.
   - ຜູ້ໃດມີໃຈອ່ອນຫວານ ຈະໄດ້ຮັບແຜ່ນດິນໂລກເປັນມໍຣະດົກ.

   ສລູບຄວາມລົ້ມເຫລວຂອງປັນຍາໂດຍກ່າວວ່າ, ພວກເຮົາຈະຕ້ອງລະວັງໃນການສແວງຫາປັນຍາຂອງໂລກນີ້ ຊຶ່ງຈົບລົງທີ່ຄວາມບ້າຄັ່ງ. ແຕ່ຖ້າພວກເຮົາສແວງຫາພຣະເຈົ້າປັນຍານັ້ນຈະຕິດຕາມມາ.

8. ພານັກຮຽນເບິ່ງພຣະທັມຕໍ່ໄປແລະຟັງເບິ່ງຄວາມລົ້ມເຫລວຂອງຄວາມສນຸກວ່າມີແນວໃດແດ່. ອ່ານປັນຍາຈານ 2:1-17, 22-23 ໃຫ້ທຸກຄົນຟັງ. ໃຫ້ຜູ້ນຶ່ງຂຽນຄຳຕອບໃສ່ກະດານ. (ຄຳຕອບ: ການຫົວເລາະກໍຄ່ອຍໝົດໄປ, ວຽກງານກໍບໍ່ເກີດຜົນ, ການສະສົມຊັບສົມບັດບໍ່ໄດ້ນຳຄວາມສຸກທີ່ແທ້ມາໃຫ້, ຄົນສລາດແລະຄົນໂງ່ກໍຕາຍເໝືອນກັນ). ບອກໃຫ້ທຸກຄົນຮູ້ວ່າແມ່ນວ່າຄຣູຈະພົບຄວາມສຳເຣັດໃນຊີວິດ, ທ່ານໄດ້ປະສົບຄວາມລຳບາກ ແລະຖາມຕົວເອງວ່າ ຊີວິດນີ້ມີຄວາມໝາຍຫຍັງ?

9. ເບິ່ງຄຳຖາມເພື່ອການສຳຣວດໃນບົດຮຽນນີ້ອີກເທື່ອນຶ່ງ. ບັລຍາຍວ່າຄຣູໄດ້ເຫັນແສງສວ່າງໃນບັ້ນປາຍແລະທ່ານໄດ້ສລູບໃນປັນຍາຈານ 3:14. ໃຫ້ຜູ້ນຶ່ງອ່ານ. ບອກນັກຮຽນວ່າເວລາພວກເຮົາຢຳເກງພຣະເຈົ້າ ຊີວິດນີ້ກໍມີຄວາມໝາຍ.

<u>ນຳບົດຮຽນໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. **ຖາມ:** ທ່ານຄິດວ່າເປັນຫຍັງການສແວງຫາຄວາມໝາຍໃນຊີວິດຂອງຄຣູຈຶ່ງບໍ່ສຳເຣັດ?

11. ພານັກຮຽນໃຫ້ຄິດພິຈາຣະນາຄຳຖາມຕໍ່ໄປນີ້:
   - ຂ້ອຍເຊື່ອປັນຍາຂອງໂລກນີ້, ຫລືຂ້ອຍສແວງຫາພຣະເຈົ້າ?
   - ຂ້ອຍສແວງຫາຄວາມພໍໃຈໃນຄວາມສນຸກຂອງໂລກບໍ່?
   - ຂ້ອຍຍອມໃຫ້ພຣະເຈົ້າເປັນນຶ່ງໃນຊີວິດ ເພື່ອຈະໃຫ້ຊີວິດນີ້ມີຄວາມໝາຍແລະມີຈຸດປະສົງບໍ່?
   - ຄວາມສັມພັນຂອງຂ້ອຍກັບພຣະເຈົ້າຢູ່ໃນສະພາບໃດ ໃນປັດຈຸບັນນີ້?

12. ບັລຍາຍວ່າ ພວກເຮົາໃນສມັຍນີ້ກໍບໍ່ແຕກຕ່າງກັບສມັຍຂອງຄຣູເລີຍ ກ່ຽວກັບການສແວງຫາຄວາມໝາຍຂອງ ຊີວິດ. ພວກເຮົາວິ້ງເຕັ້ນ, ພວກເຮົາສູ້ຊົນ, ພວກເຮົາສອບຖາມ, ພວກເຮົາເພີ້ຝັນ, ພວກເຮົາຮ້ອງໄຫ້, ພວກເຮົາ ຊອກຫາ, ແລະພວກເຮົາພຍາຍາມ. ບາງທີໃນລະຍະການເດີນທາງນີ້ ພວກເຮົາອາດຈະຮູ້ສືກເໝືອນອັຄສາວົກ ເປໂຕ ໃນພຣະທັມໂຢຮັນ 6: 68, "ນາຍເຈົ້າເອີຍ, ພວກຂ້ານ້ອຍຈະໜີໄປຫາຜູ້ໃດ? ທ່ານມີຖ້ອຍຄຳຊິ່ງໃຫ້ຊີວິດ ອັນຕລອດໄປເປັນນິດ."

ອ້ອນວອນປິດການສຶກສາພຣະທັມ.

*ດຣ. ສິດນີ ດານ*

# ຄຳແນະນຳສຳລັບຄຣູສອນ
# ບົດຮຽນບົດທີ 9
# ສູ່ຊີວິດທີ່ມີຄວາມໝາຍຫລາຍຂຶ້ນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ປັນຍາຈານ 9:7-10; 12:1-8, 13-14

**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ປັນຍາຈານ 9; 12

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາສາມາດກ້າວໄປສູ່ຊີວິດທີ່ມີຄວາມໝາຍຫລາຍຂຶ້ນໂດຍການຍິນດີໃນພຣະພອນຊຶ່ງເປັນຊັພສິ່ງຂອງທີ່ພຣະເຈົ້າຊົງປະທານ ແລະໂດຍການຮັບໃຊ້ພຣະອົງຢ່າງຊື່ສັດ.

**ຄຳຖາມເພື່ອການສຳຣວດ:** ພຣະເຈົ້າຊົງປະສົງໃຫ້ພວກເຮົາມີຄວາມຍິນດີໃນຊີວິດຫລາຍປານໃດ? ໂດຍວິທີໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຮູ້ວ່າມີຫຍັງແດ່ທີ່ຂ້າພະເຈົ້າສາມາດເຮັດໄດ້ເພື່ອຈະເພີ່ມຄວາມໝາຍໃນຊີວິດ.

## ແຜນສຳລັບການສອນ

**ນຳເຣື່ອງເຂົ້າສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)**

1. ເຊີນນັກຮຽນຫລາຍຄົນໃຫ້ຕື່ມຄວາມທີ່ຂາດໃນປາຍປໂຍກ, "ເວລາທີ່ມີຄວາມໝາຍທີ່ສຸດໃນຊີວິດຂ້ອຍແມ່ນຕອນ............."

2. ເຊີນນັກຮຽນຫລາຍຄົນໃຫ້ຕື່ມຄວາມທີ່ຂາດໃນປາຍປໂຍກ, "ກ່ອນທີ່ຈະຕາຍຈາກໂລກໄປ ຂ້ອຍຢາກຈະ......."

3. ໃຊ້ "ຄຳຖາມເພື່ອການສຳຣວດ" ສຳລັບບົດຮຽນນີ້ເພື່ອການສົນທະນາວ່າ, ພຣະເຈົ້າຊົງປະສົງໃຫ້ພວກເຮົາມີຄວາມຍິນດີໃນຊີວິດຫລາຍປານໃດ? ໂດຍວິທີໃດ?

**ນຳພາການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)**

4. ພິຈາຣະນາບົດຮຽນເປັນຂັ້ນໄປ: "ສູ່ຊີວິດທີ່ມີຄວາມໝາຍຫລາຍຂຶ້ນ"

   ການແຂ່ງຂັນບໍ່ແມ່ນຈະວ່ອງໄວສເມີໄປ (9:7-12)

   ຈົ່ງລະນຶກເຖິງພຣະຜູ້ສ້າງຂອງເຈົ້າເມື່ອເຈົ້າຍັງໜຸ່ມ (12:1-8)

   ໜ້າທີ່ທັງໝົດຂອງບຸກຄົນ (12:13-14)

5. ໃຫ້ຜູ້ນຶ່ງອ່ານ ປັນຍາຈານ 9:7-10. ໃຫ້ທຸກຄົນຟັງຄຳແນະນຳຂອງຄຣູ ແລ້ວຖາມ:
   - ພຣະທັມໃນຕອນນີ້ກົງກັນຂ້າມກັບສິ່ງທີ່ໄດ້ຮຽນມາໃນປັນຍາຈານບໍ່? ຕ່າງກັນແນວໃດ? (ເບິ່ງ ປັນຍາຈານ 2:24-25; 3:12-13, 22; 5:18-20; 8:15)
   - ທ່ານຄິດວ່າພຣະທັມນີ້ແມ່ນສຳລັບຜູ້ເຊື່ອເທົ່ານັ້ນບໍ່? ເປັນຫຍັງ?

- ເຄື່ອງຮົ່ມສີຂາວ ແລະນ້ຳມັນຢ່າງມັ່ງຄັ່ງມີຄວາມໝາຍແນວໃດ?
- ອີງຕາມພຣະທັມໃນຕອນນີ້, ຖ້າໄພ່ພົນຂອງພຣະເຈົ້າຈະຊົມຊື່ນຍິນດີໃນສິ່ງທີ່ພຣະເຈົ້າສ້າງ ເປັນເຣື່ອງທີ່ຖືກຕ້ອງບໍ່?

6. ໃຫ້ຜູ້ນຶ່ງອ່ານປັນຍາຈານ 12:1-8. ໃຊ້ບົດຮຽນເພື່ອອະທິບາຍຫົວຂໍ້ "ຈົ່ງລະນຶກເຖິງພຣະຜູ້ສ້າງຂອງເຈົ້າເມື່ອເຈົ້າຍັງໜຸ່ມ (12:1-8)." ທ່ານອາດຈະພິຈາຣະນາຄວາມຄິດຕໍ່ໄປນີ້:
   - ມີການຊັກຊວນໄພ່ພົນຂອງພຣະເຈົ້າໃຫ້ "ລະນຶກ" ຫລາຍໆເທື່ອໃນພຣະບັນຍັດທີສອງ (ເບິ່ງບັນຍັດທີສອງ 4:10; 5:15; 7:18; 8:2; 9:7, 27; 15:15; 16:3, 12; 24:9, 18,22; 25:17; 32:7)
   - ໄພ່ພົນຂອງພຣະເຈົ້າໄດ້ສິ້ນສຸດການອົພຍົບແລະໄດ້ລໍຖ້າພຣະເຈົ້າຢູ່ແຄມນອກຂອງແຜ່ນດິນແຫ່ງພຣະສັນຍາ.
   - ແນ່ນອນຫລາຍຄົນຈະຕ້ອງຄິດ, ຊີວິດຄວນຈະມີຄວາມໝາຍຫລາຍກວ່ານີ້!
   - ໄພ່ພົນຂອງພຣະເຈົ້າເປັນຄົນມັກລືມ!
   - ພຣະເຈົ້າໃຊ້ເວລານີ້ເພື່ອເຕືອນພວກເຂົາເຣື່ອງສິ່ງທີ່ເຂົາຂໍ ແລະຄຸນຄວາມດີຂອງພຣະອົງສຳລັບພວກເຂົາ.
   - ພວກເຮົາສາມາດເຊື່ອໝັ້ນກັບພຣະເຈົ້າໃນສິ່ງທີ່ພຣະອົງກຳລັງເຮັດ ຖ້າພວກເຮົາລະນຶກເຖິງສິ່ງທີ່ພຣະອົງໄດ້ກະທຳ.
   - ບາງທີການລະນຶກເຖິງສິ່ງຜ່ານມາ ສາມາດໃຫ້ຄວາມຫວັງໃນມື້ໜ້າ ແລະຊ່ວຍຊີວິດໃຫ້ມີຄວາມໝາຍຫລາຍຂຶ້ນ.
   - ຜົນຮ້າຍມັກຈະເກີດຂຶ້ນຖ້າພວກເຮົາບໍ່ "ລະນຶກ."

7. ອ່ານປັນຍາຈານ 12:1-8 ອີກເທື່ອນຶ່ງ; ພານັກຮຽນພິຈາຣະນາຄຳຖາມຕໍ່ໄປນີ້:
   - ເປັນຫຍັງທ່ານຄິດວ່າການລະນຶກໃນຕອນນີ້ມີຄວາມສຳຄັນ?
   - ສຳນຽງຂອງຄຣູໃນຕອນນີ້ເຮັດໃຫ້ຄວາມຫວັງໃນມື້ໜ້າດີຂຶ້ນ ຫລືເສົ້າລົງ?
   - ທ່ານຄິດວ່າຄຣູຕ້ອງການເວົ້າຫຍັງ?

8. ອ່ານປັນຍາຈານ 12:13-14 ໃຫ້ທຸກຄົນຟັງ. ບອກທຸກຄົນວ່າຄວາມຈິງໃນຕອນນີ້ອາດຈະເປັນກຸນແຈໄປສູ່ຊີວິດທີ່ມີຄວາມໝາຍ. ມັນເວົ້າເຖິງສິ່ງທີ່ບຸກຄົນຈະຕ້ອງເຮັດ (ຢຳເກງພຣະເຈົ້າ, ເຊື່ອຟັງພຣະບັນຍັດ) ແລະສິ່ງທີ່ພຣະເຈົ້າຈະຊົງເຮັດ (ພິພາກສາການງານຂອງມະນຸດທັງດີ ແລະຊົ່ວ).

<u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

9. ພານັກຮຽນຕອບຄຳຖາມແຕ່ລະຂໍ້ໃນຕອນສຸດທ້າຍຂອງບົດຮຽນນີ້.

10. ບອກນັກຮຽນວ່າຖ້າຈະເຂົ້າໃຈບົດຮຽນນີ້ຢ່າງລຶກຊຶ້ງພວກເຮົາຈະຕ້ອງຖາມຕົວເອງວ່າ, ຊີວິດຂ້ອຍມີຄວາມໝາຍບໍ່? ເປັນຫຍັງ?. ພຣະທັມປັນຍາຈານໄດ້ບອກຫຍັງແດ່ຖ້າຢາກໃຫ້ຊີວິດນີ້ມີຄວາມໝາຍ? ໃຫ້ນັກຮຽນຕອບຄຳຖາມເຫລົ່ານັ້ນ.

11. ອ້ອນວອນປິດການສຶກສາພຣະທັມ ແລະຊັກຊວນນັກຮຽນໃຫ້ແຕ່ລະຄົນໄດ້ດຳເນີນຊີວິດຢ່າງມີຄວາມໝາຍ ເພາະພຣະເຈົ້າຊົງມີພຣະປະສົງໃຫ້ທຸກຄົນເຮັດຢ່າງນັ້ນ.

*ດຣ. ສິດນີ ຄານ*

# <u>ຄຳແນະນຳສຳລັບຄຣູສອນ</u>

## <u>ບົດຮຽນບົດທີ 10</u>

## <u>ອີກດົນປານໃດ, ພຣະຜູ້ເປັນເຈົ້າ?</u>

---

**<u>ຂໍ້ພຣະຄັມພີສຳລັບບົດຮຽນນີ້:</u>** ຮາບາກຸກ :1--2: 4, 15-15

**<u>ຂໍ້ພຣະຄັມພີສຳລັບສຳລັບເບື້ອງຫຼັງ:</u>** ຮາບາກຸກ 1--2

**<u>ຈຸດສຳຄັນຂອງບົດຮຽນນີ້:</u>** ພຣະເຈົ້າຈະຊົງນຳຄວາມທ່ຽງທັມມາສູ່ໂລກຂອງພວກເຮົາ, ເຖິງວ່າວິທີແລະວັນເວລານັ້ນຈະບໍ່ເປັນໄປຕາມກຳນົດແລະຄວາມຕ້ອງການຂອງພວກເຮົາ.

**<u>ຄຳຖາມເພື່ອການສຳຣວດ:</u>** ພວກເຮົາຈະເຊື່ອພຣະເຈົ້າໄດ້ບໍ່ວ່າພຣະອົງຈະຊົງນຳຄວາມທ່ຽງທັມມາສູ່ໂລກຂອງເຮົາ?

**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອສລຸບເບິ່ງຄຳສົນທະນາຣະຫວ່າງຜູ້ປະກາດພຣະທັມ ແລະພຣະຜູ້ເປັນເຈົ້າເຣື່ອງພຣະອົງຈະນຳຄວາມທ່ຽງທັມມາສູ່ໂລກ ແລະຄວາມໝາຍຂອງເຣື່ອງນີ້ສຳລັບພວກເຮົາໃນສມັຍນີ້.

## <u>ແຜນສຳລັບການສອນ</u>

### <u>ນຳບົດຮຽນສູ່ຊີວິດຈິງ (ໃຊ້ເວລາ 5 ນາທີ)</u>

1. ຂຽນຄຳຖາມຕໍ່ໄປນີ້ໃສ່ກະດານ: ມີຫຍັງແດ່ທີ່ທ່ານກຳລັງລໍຄອຍຢູ່?

2. ຖາມສະບາຍແຕ່ລະຄົນເວລານັກຮຽນຍ່າງເຂົ້າມາໃນຫ້ອງຮຽນ ແລະເຊີນໃຫ້ທຸກຄົນຕອບຄຳຖາມຢູ່ກະດານ. ສົນທະນາເລັກນ້ອຍ. ຖາມ: ເປັນຫຍັງການລໍຄອຍພຣະເຈົ້າຈຶ່ງເປັນເຣື່ອງຍາກສຳລັບພວກເຮົາ?

### <u>ນຳການສຶກສາພຣະທັມ (ໃຊ້ເວລາ 30 ນາທີ)</u>

3. ແນະນຳບົດຮຽນສຳລັບມື້ນີ້, "ອີກດົນປານໃດ, ພຣະຜູ້ເປັນເຈົ້າ?" ອະທິບາຍການລໍຄອຍພຣະເຈົ້າຂອງຜູ້ປະກາດພຣະທັມຮາບາກຸກ.

4. ແນະນຳພຣະທັມຮາບາກຸກໂດຍໃຊ້ຂໍ້ມູນຈາກບົດຮຽນ ແລະຈາກການຄົ້ນຄວ້າມາຈາກບ່ອນອື່ນໆ.

5. ຕຣຽມນັກຮຽນສອງຄົນໄວ້ລ່ວງໜ້າເພື່ອການສົນທະນາ. ບອກທຸກຄົນວ່າບົດຮຽນມື້ນີ້ແມ່ນການສົນທະນາຣະຫວ່າງພຣະເຈົ້າ ແລະຮາບາກຸກ, ແລ້ວກໍຈະມີການສົນທະນາກັນຫລັງຈາກແຕ່ລະສາກໄດ້ຈົບລົງ.

### <u>ຄຳສົນທະນາຣະຫວ່າງພຣະເຈົ້າກັບຮາບາກຸກ(ຮາບາກຸກ 1-2)</u>

**<u>ສາກທີນຶ່ງ</u>**

ຮາບາກຸກ: ອ່ານ ຮາບາກຸກ 1:2-4
ພຣະເຈົ້າ: ອ່ານ ຮາບາກຸກ 1:5-11.

6. ຖາມ: ເປັນຫຍັງຮາບາກຸກຈຶ່ງປລາດໃຈໃນຄຳຕອບຂອງພຣະເຈົ້າ? ຮາບາກຸກອະທິບາຍສະພາບຂອງຢູດາແນວໃດ? ສະຖານະການນີ້ມີສ່ວນຄ້າຍຄືກັນກັບສະພາບຂອງພວກເຮົາໃນສມັຍນີ້ແນວໃດ?

7. ອ່ານຕໍ່ໄປ.

<u>ສາກທີສອງ</u>

ຮາບາກຸກ: ອ່ານຮາບາກຸກ 1: 12-2:1

ພຣະເຈົ້າ: ອ່ານ ຮາບາກຸກ 2:2-4

8. ອະທິບາຍຄຳເວົ້າໃນ 2:4, "ຄົນທີ່ຊອບທັມຈະມີຊີວິດຢູ່ດ້ວຍວ່າເຂົາສັດຊື່ຕໍ່ພຣະເຈົ້າ." ແລ້ວປຽບທຽບໃສ່ຄຳເວົ້າຂອງໂປໂລ ໃນໂຣມ 1:17 ທີ່ວ່າ, "ຜູ້ທີ່ຊົງຖືວ່າເປັນຄົນຊອບທັມເພາະດ້ວຍຄວາມເຊື່ອ ຜູ້ນັ້ນແຫລະ, ຈະໄດ້ຊີວິດ." ຖ້ອຍຄວາມທັງສອງແຕກຕ່າງກັນແນວໃດ? ຊ່ວຍອະທິບາຍ.

9. ອ່ານເຄາະກັມຕ່າງໆໃນຮາບາກຸກ 2:6, 9, 12, 15-16, 19. ອະທິບາຍແຕ່ລະຢ່າງ.

## <u>ນຳພຣະທັມໄປໃຊ້ໃນຊີວິດ (ໃຊ້ເວລາ 15 ນາທີ)</u>

10. ພານັກຮຽນຕອບຄຳຖາມຕໍ່ໄປນີ້:

- ທ່ານຈະສລູບຄຳຖາມຂອງຮາບາກຸກສຳລັບພຣະເຈົ້າຢ່າງໃດ?
- ທ່ານຈະສລູບຄຳຕອບຂອງພຣະເຈົ້າສຳລັບຮາບາກຸກຢ່າງໃດ?
- ທ່ານຈະສລູບຄຳຕອບຂອງຮາບາກຸກຢ່າງໃດ?
- ສິ່ງເຫລົ່ານັ້ນມີຄວາມໝາຍຢ່າງໃດສຳລັບພວກເຮົາ?
- ທ່ານມີປະສົບການເຣື່ອງພຣະເຈົ້າໄດ້ຊົງຕອບການອ້ອນວອນຂອງທ່ານ ຫລັງຈາກການລໍຄອຍມາດົນນານບໍ່?

11. ອ້ອນວອນປິດດ້ວຍການຂອບພຣະຄຸນພຣະເຈົ້າທີ່ພຣະອົງຍັງຊົງຄວບຄຸມທຸກຢ່າງໃນຊີວິດມະນຸດ ແລະຂໍໃຫ້ພຣະອົງຊົງເຕືອນທຸກຄົນວ່າຄວາມທ່ຽງທັມຂອງພຣະອົງຈະໄດ້ຊັຍຊະນະໃນຄາວສຸດທ້າຍ.

*ດຣ. ສິດນີ ຄານ*

# ບົດແນະນຳຄຣູສອນ
# ບົດຮຽນບົດທີ 11
# ວ່າດ້ວຍຄວາມເຊື່ອ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ຮາບາກຸກ 3:1-2, 12-19
**ຂໍ້ພຣະຄັມທັງຫມົດສຳລັບບົດຮຽນນີ້:** ຮາບາກຸກ 3
**ຈຸດສຳຄັນຂອງບົດຮຽນນີ້:** ຄວາມເຊື່ອສາມາດສູ້ທົນຕໍ່ບັນຫາຕ່າງໆ
**ຄຳຖາມເພື່ອການສຳຣວດ:** ຄວາມເຊື່ອຊ້ອນທ່ານແນວໃດເມື່ອພົບກັບບັນຫາ
**ຈຸດປະສົງຂອງບົດຮຽນນີ້:** ເພື່ອສອນໃຫ້ເຮົາລໍຖ້າການຊ່ວຍເຫລືອທີ່ມາຈາກພຣະເຈົ້າ

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂື້ນແຕ່ລະວັນໆ.

## ວິທີສອນ

ບົດຮຽນວັນນີ້ຈະເວົ້າເຖິງຜູ້ປະກາດພຣະທັມຮາບາກຸກທີ່ຖືກທົດລອງຝ່າຍຄວາມເຊື່ອ, ໃນທີ່ສຸດເພິ່ນກໍຍືນໝັ້ນຄົງຕໍ່ການທົດລອງ ແລະກໍຫວັງວ່າບົດຮຽນນີ້ຈະຊ່ວຍໃຫ້ທ່ານມີຄວາມເຊື່ອໝັ້ນຄົງຄືຜູ້ປະກາດພຣະທັມຮາບາກຸກ.

1. ຂຽນຫົວຂໍ້ວ່າ **ສິ່ງທີ່ເຮົາລໍຖ້າ**

*ສິ່ງດີ* *ສິ່ງບໍ່ດີ*

ທັງສອງຢ່າງນີ້ທ່ານມັກອັນໃດ? ສ່ວນຫລາຍແມ່ນອັນໃດມາ? ໃຫ້ເວລານັກຮຽນອອກຄຳເຫັນຈັກ 5 ນາທີ ແລ້ວສເລີຍຄຳຕອບວ່າ ຄົນສ່ວນຫລາຍຈະເຫັນແຕ່ສິ່ງບໍ່ດີເຂົ້າມາໃນຊີວິດ ຄວາມຈິງສິ່ງດີກໍເຂົ້າມາທຸກວັນ ໂດຍສເພາະແມ່ນວັນອາທິດທີ່ເຮົາໄດ້ຮັບພຣະພອນອັນໃຫຍ່ຫລວງ ແຕ່ຫລາຍຄົນເບິ່ງຂ້າມໄປເທົ່ານັ້ນ.

**2.** ຂຽນຄຳວ່າ ***ພຣະພອນ*** ລົງກະດານແລ້ວຖາມນັກຮຽນວ່າ ພຣະພອນສຳລັບທ່ານແມ່ນອັນໃດ? ຫລືໝາຍເຖິງຫຍັງ? ຂໍໃຫ້ສອງຫລືສາມຄົນອອກຄຳເຫັນ ແລະຄຣູຂຽນຄຳເຫັນຂອງນັກຮຽນລົງກະດານ.

**3. ອ່ານ 3:1-2 ຄຳອ້ອນວອນຂອງຮາບາກຸກ**

ກ. *"ໂອພຣະຜູ້ເປັນເຈົ້າ ຂ້ານ້ອຍໄດ້ຍິນກ່ຽວກັບ ສິ່ງພຣະອົງໄດ້ຊົງເຮັດ"* (ຂໍ້ 2ກ). ພຣະຄັມພີບໍ່ໄດ້ບອກວ່າຮາບາກຸກເວົ້າເຣື່ອງອັນໃດ ແຕ່ພວກສາສານາສາດມີຄຳເຫັນວ່າ ຮາບາກຸກໄດ້ຍິນເຣື່ອງພຣະເຈົ້າຊົງລົງໂທດກຸງບາບີໂລນແລ້ວເຮັດໃຫ້ເພິ່ນມີຄວາມຢຳເກງພຣະເຈົ້າຫລາຍຂື້ນໂດຍສະເພາະແມ່ນເຣື່ອງໃນພຣະທັມດານີເອນບົດ 5.

ຂ. *"ບັດນີ້ຂໍຊົງຮື້ຟື້ນພຣະຣາຊກິດຂອງພຣະອົງຂື້ນໃໝ່"* (ຂໍ້ 2ຂ). ແປວ່າເພິ່ນໄດ້ຂໍໃຫ້ພຣະອົງຊົງທຳລາຍຄົນຊົ່ວຮ້າຍຄືພຣະອົງໄດ້ທຳລາຍກຸງບາບີໂລນມາແລ້ວ.

ຄ. *"ແມ່ນວ່າຍາມພຣະອົງພຣະພິໂຣດ ຂໍຊົງເມດຕາແດ່ທ້ອນ"* (ຂໍ້ 2ຄ). ສາສນາສາດຕີຄວາມໝາຍວ່າຫາກພຣະເຈົ້າຊົງພຣະພິໂຣດ (ໃຈຮ້າຍ) ໂດຍການຂໍຂອງຮາບາກຸກ ກໍຂໍຊົງເມດຕາໃຫ້ອາພັຍແດ່ທ້ອນ ຫລືຫາກພຣະເຈົ້າ

ຊົງພຣະພິໂຣດລົງໂທດພວກຊົ່ວຮ້າຍກໍຂໍຢ່າໃຫ້ມາເຖິງເພິ່ນ. ແມ່ນແທ້ພຣະເຈົ້າຂອງພວກເຮົາຊົງເປັນພຣະເຈົ້າທີ່ມີຄວາມເມດຕາກະຣຸນາ ຫາກພຣະອົງບໍ່ເມດຕາສົງສານຄົນຊົ່ວຮ້າຍໂດຍໃຫ້ເວລາເຂົ້າກັບໃຈອີກຄັ້ງນຶ່ງປານນີ້ຄົນຊົ່ວຮ້າຍຄົງຈະບໍ່ເຫລືອຈັກຄົນແລ້ວ.

**4. <u>ອ່ານ 3:3-15 ພຣະເຈົ້າຈະສະເດັດມາ</u>**

ກ. ຮາບາກຸກເວົ້າວ່າ *"ພຣະເຈົ້າຈະກັບມາເມືອງເອໂດມອີກ"* ແປວ່າພຣະເຈົ້າເຄີຍມາກ່ອນແລ້ວ.

ຂ. ຮາບາກຸກພັລະນາພຣະສະຫງ່າຣາສີຂອງພຣະເຈົ້າຂໍ້ 3-4

ຄ. ຈະສະເດັດມາແຕ່ພູປຣານ, ພູໜ່ວຍນີ້ມີເຂດແດນຕິດກັບພູຊີນາຍທີ່ໂມເຊຮັບພຣະບັນຍັດ

ງ. *ພຣະອົງຈະໃຫ້ໂລກລະບາດມາກ່ອນ ແລະໃຫ້ຄວາມຕາຍມາຕາມຫລັງ* "(ຂໍ້ 5) ຄົນທັງຫລາຍຈະເປັນພະຍາດຕ່າງໆ ພ້ອມທັງຄວາມທຸກຍາກລຳບາກອື່ນໆ ກ່ອນພຣະອົງຈະກັບມາ.

ຈ. *"ພຣະອົງສະເດັດອອກໄປຊ່ອຍໄພ່ພົນ ແລະເຈົ້າຊີວິດ ທີ່ພຣະອົງຊົງເລືອກໄວ້"* (ຂໍ້ 13). ພວກທີ່ພຣະອົງຊົງເລືອກຈະບໍ່ພົບກັບໂຣກຣະບາດ ແລະຄວາມຍາກລຳບາກໃນຄາວສຸດທ້າຍ.

**5. <u>3:16-19 ຄວາມແນ່ໃຈຂອງຮາບາກຸກ</u>**

ກ. ຮາບາກຸກແນ່ໃຈວ່າພຣະເຈົ້າຈະມາ ແລະຈະລໍຄອຍຢ່າງມິດໆ (ຂໍ້ 16ຂ).

ຂ. ການລໍຄອຍດ້ວຍຄວາມຫວັງສອງປະການຄື:

1. *"ວັນຊຶ່ງພຣະເຈົ້າຈະລົງໂທດຜູ້ທີ່ໂຈມຕີພວກຂ້ານ້ອຍ"* (ຂໍ້ 16ຂ) ແປວ່າລໍຖ້າພຣະເຈົ້າລົງໂທດພວກໂຈມຕີ ແລະລົງໂທດພວກໃຊ້ອຳນາດກົດຂີ່ຂົ່ມເຫັງຜູ້ທີ່ເຊື່ອພຣະເຈົ້າ.
2. *"ພຣະເຈົ້າເປັນພຣະຜູ້ຊ່ອຍຂອງຂ້ານ້ອຍ"* (ຂໍ້ 18-19). ລໍຄອຍວັນຊຶ່ງພຣະເຈົ້າວັນທີ່ພຣະຜູ້ເປັນເຈົ້າຈະມາຊ່ອຍ, ຄຳວ່າຊ່ອຍແມ່ນຊ່ອຍໃຫ້ພົ້ນຈາກການໂຈມຕີ, ພົ້ນຈາກການຂົ່ມເຫັງ ແລະພົ້ນຈາກບົງໄຟນະຮົກ.

ຄ. ສລຸບແລ້ວຮາບາກຸກຈະສູ້ທົນຕໍ່ທຸກຢ່າງໃນເວລານີ້ ແຕ່ຝາກຄວາມຫວັງທັງໝົດໄວ້ກັບພຣະເຈົ້າໃນເວລາທີ່ພຣະອົງສະເດັດກັບມາ.

<u>ຄຳຖາມ</u>:

1. ການລໍຄອຍຂອງທ່ານກັບການລໍຄອຍຂອງຮາບາກຸກແຕກຕ່າງກັນແນວໃດ?

2. ຊີວິດການຮັບໃຊ້ຂອງຮາບາກຸກໄດ້ຊ່ອຍກະຕຸ້ນຈິດໃຈທ່ານແນວໃດ?

3. ເຮັດແນວໃດເຮົາຈຶ່ງຈະເປັນຄືຮາບາກຸກ.

*ດຣ. ທຸນພັນ ວົງສຸຣິດທ໌*

## ບົດແນະນຳຄູສອນ
## ບົດຮຽນບົດທີ 12
## ສຽງຄວນເປຣູຊາເລັມ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງຄ່ຳຄວນ 1:1-5, 12-22
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ເພງຄ່ຳຄວນ 1-2
**ຈຸດສຳຄັນຂອງບົດຮຽນນີ້:** ຄົນທີ່ໂສກເສົ້າກັບຄວາມຜິດພາບຂອງຕົນເອງ.
**ຄຳຖາມເພື່ອການສຳຣວດ:** ຈະເຮັດຜິດອີກບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າການໂສກເສົ້າໄດ້ເກີດຂຶ້ນເທົ່າທຸກວັນນີ້.

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**
- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເສີມຂຍາຍຄວາມເຊື່ອໃຫ້ຈະເຣີນຂຶ້ນແຕ່ລະວັນໆ.

### ບົດນຳ
ພຣະທັມເພງຄ່ຳຄວນເປັນພຣະທັມແບບພາສາເພງຂອງຜູ້ເຊື່ອໃນພຣະເຈົ້າ, ຜູ້ແຕ່ງເພງຄ່ຳຄວນໄດ້ແຕ່ງເພງອອກມາຈາກຄວາມຮູ້ສຶກໃນຈິດໃຈສ່ວນເລິກຂອງເພິ່ນໃນຮູບແບບກາບກອນຂອງຊາວເຮັບເຣີ ທີ່ຮ້ອງຄ່ຳຄວນເຣື່ອງຄວາມທຸກໂສກໃນໃຈຂອງຕົນ ມັນກໍຄ້າຍກັບບົດເພງໃນສມັຍນີ້ທີ່ນັກປະພັນເພງໄດ້ກັ່ນກ່ອງຮ້ອງຄວນຄາງເປັນສຽງເພງໄປຍັງຄົນຮັກຂອງຕົນ. ໝາຍເຫດ: ໃນບົດເພງຄ່ຳຄວນນີ້ຂ້າພະເຈົ້າຢ້ານວ່າຫລາຍຄົນບໍ່ມີພຣະທັມເຫລັ້ມນີ້ ດັ່ງນັ້ນຈຶ່ງຂໍແນະນຳຄູໃຫ້ຄອບປີ້ບົດຮຽນ ຫລືຂໍ້ພຣະທັມແຕ່ລະຕອນໃນບົດຮຽນບົດນີ້ໃຫ້ລູກສິດທຸກຄົນ.

### ອ່ານ 1:1-5 ຜົນສະທ້ອນຂອງການເຮັດບາບ
ຂໍ້ 1 ເປັນຮູບພາບຂອງການສູນເສັຽກຽດແລະເສັຽສັກສີໃນເມື່ອຄັ້ງນຶ່ງເຄີຍຮັບກຽດຈາກໂລກ ແລະກາຍມາເປັນເໝືອນຍິງໝ້າຍທີ່ສູນເສັຽສາມີຜູ້ມີກຽດ, ເມື່ອສາມີຂອງນາງຕາຍໄປພວກເຈົ້າໜີ້ກໍມາຍຶດຊັບສົມບັດແລະພວກຂ້ອຍໃຊ້ຂອງນາງໄປ. ເປຣູຊາເລັມເປັນເໝືອນຍິ່ງໝ້າຍທີ່ຕົກໃນສະພາບແນວນີ້.

ຂໍ້ 2 ເປຣູຊາເລັມ ກາຍເປັນຍິງໝ້າຍທີ່ຮັບຄວາມທຸກຣະທົມຮ້ອງໃຫ້ທັງວັນທັງຄືນ ແລະກໍບໍ່ມີໃຜມາປະເລົ້າປະໂລມຈິດໃຈທີ່ບອບຊ້ຳນັ້ນ ແມ່ນແຕ່ມິດສະຫາຍກໍຫ່າງເຫີນ ແຖມຍັງທັກຫລັງເຮັດການຮ້າຍຕໍ່ນາງອີກ.

ຂໍ້ 3 ພວກປະຊາຊົນຂອງນາງກໍຕົກໄປເປັນທາດທີ່ປະເທດອື່ນທີ່ຫ່າງໄກຈາກບ້ານເມືອງຂອງຕົນ, ໃນຂະນະທີ່ເຂົາເປັນທາດນັ້ນເຂົາບໍ່ມີຫຍັງເປັນຂອງສ່ວນຕົວ ແລະຍັງເປັນເໝືອນຊະເລີຍເສິກທີ່ບໍ່ສາມາດຫລົບໜີຈາກວົງລ້ອມຂອງພວກສັດຕຣູໄດ້.

4. ພູຊີໂອນຊຶ່ງເປັນບ່ອນນະມັສການອັນສັກສິດ, ເຄີຽນະມັສການຢ່າງມີຄວາມສຸກກໍກັບກາຍເປັນບ່ອນໂສກເສົ້າ ດ້ວຍວ່າພວກຜູ້ຮັບໃຊ້ແລະພວກປະໂລຫິດກໍຄວນຄາງ, ພວກຜູ້ຍິ່ງທີ່ເຄີຽຮ້ອງເພງສັຣເສີນໃນພຣະວິຫານກໍພາກັນທົນທຸກທໍຣະມານດ້ວຍ.

ຂໍ້ 5 ພວກສັດຕຣູທີ່ເຄີຍຕໍ່ສູ້ກັນມານານກໍກັບກາຍມາເປັນນາຍຂອງນາງ. ເຫດການທີ່ເກີດຂຶ້ນທັງໝົດນີ້ນາງສາຣະພາບວ່າ ຍ້ອນນາງເຮັດບາບ ຈຶ່ງທົນທຸກທໍຣະມານຢ່າງນີ້.

**ອ່ານ 1:12-16 ຮ້ອງໄຫ້ຂໍຄວາມເຫັນໃຈ**

ຂໍ້ 12 *ຫລຽວເບິ່ງຂ້ອຍແດ່* ແປວ່າເມດຕາກະຣຸນນາຂ້ອຍແດ່ ເພິ່ນຮ້ອງຫາເພື່ອນຝູງຂໍຄວາມເຫັນໃຈແດ່ ເຖິງແມ່ນພຣະຜູ້ເປັນເຈົ້າຈະນຳເອົາຄວາມເຈັບປວດມາໃຫ້ກໍຕາມ ຫາກມີເພື່ອນຈັກຄົນເລົ້າໂລມໃຈຄົງຈະດີ.

ຂໍ້ 13-15 ນາງສາຣະພາບວ່າ ພຣະຜູ້ເປັນເຈົ້າສົ່ງໄຟລົງມາຈາກເບື້ອງເທິງຈຶ່ງລຸກເຜົາໄໝ້ໃນໃຈຂອງນາງ, ຄວາມບາບທີ່ໄດ້ເຮັດມານັ້ນພຣະເຈົ້າໄດ້ບັນທຶກໄວ້ໝົດ ແລະຊົງມັດຄວາມບາບທັງໝົດເປັນມັດໃຫຍ່ແລ້ວຫ້ອຍເປັນຄືສາຍສ້ອຍຄ້ອງຄໍນາງ ແປວ່າສາຍສ້ອຍແຫ່ງຄວາມບາບ, ເຮັບບາບເທົ່າໃດກໍຫ້ອຍໜັກເທົ່ານັ້ນ.

ຂໍ້ 16 ນາງໄດ້ຮ້ອງໄຫ້ຈົນເບົ້າຕາທັງສອງນອງໄປດ້ວຍນ້ຳຕາ ຍ້ອນບາບທີ່ນາງໄດ້ກະທຳມາກ່ອນຍ້ອນຄວາມບາບນີ້ນາງຈຶ່ງທຸກຣະທົມໂດຍຂາດເພື່ອນທີ່ຄອຍເຫັນໃຈ.

**ອ່ານ 1:17-22 ໃນທີ່ສຸດກໍສາຣະພາບ**

ຂໍ້ 17 ຜູ້ປະພັນເພງພັລນາວ່າເພິ່ນເອງເປັນເໝືອນຄົນໄຮ້ຄ່າໃດໆ ໂດຍກ່າວວ່າ *ຂ້ອຍເດ່ມືອອກເພື່ອວິງວອນໃຫ້ຄົນຊ່ອຍເຫລືອ ແຕ່ກໍບໍ່ມີຜູ້ໃດທີ່ຈະຊ່ອຍເຫລືອຂ້ອຍໄດ້.* ເຫດຜົນທີ່ບໍ່ມີໃຜຊ່ອຍເພິ່ນນັ້ນເພິ່ນກໍຮູ້ຢູ່ວ່າເປັນດ້ວຍພຣະເຈົ້າຊົງເມີນເສີຍ ແລະລົງໂທດເພິ່ນ "*ພຣະຜູ້ເປັນເຈົ້າໄດ້ເອີ້ນເອົາເຫລົ່າສັດຕຣູມາຕໍ່ສູ້ຂ້ອຍທຸກທິດທາງ* ".

ຂໍ້ 18 ເປັນຂໍ້ສຳຄັນ, ດ້ວຍວ່າຊາໂລໂມນເອງໄດ້ສາຣະພາບຄວາມຈິງວ່າ *ພຣະຜູ້ເປັນເຈົ້າຊົງສັດຊື່ ແຕ່ຂ້ອຍບໍ່ໄດ້ເຊື່ອຟັງພຣະອົງເລີຍ* ແປວ່າພຣະເຈົ້າຊົງເປັນພຣະເຈົ້າທີ່ຍຸດຕິທັມ ເມື່ອບໍ່ຟັງຄຳສັ່ງສອນແລະປະຕິບັດຕາມຄຳສັ່ງຂອງພຣະອົງ ມັນຈະເປັນໄປບໍ່ໄດ້ທີ່ຈະໄດ້ຮັບສິ່ງທີ່ດີຈາກພຣະອົງ.

ຂໍ້ 19-20 ອິສຣາເອນຮູ້ແລ້ວວ່າການເຊື່ອຟັງເປັນແຫລ່ງພຣະພອນ ແລະແຫລ່ງແຫ່ງພຣະພອນນີ້ຍັງມີມາຈົນເຖິງເທົ່າທຸກວັນນີ້.

ຂໍ້ 21-22 ເພງຄ່ຳຄວນນີ້ບົດນີ້ໄດ້ຈົບລົງດ້ວຍການອ້ອນວອນສາຣະພາບຄວາມຜິດບາບແລະທວງຄຳສັນຍາວ່າ *ຂໍໂຜດນຳເອົາມື້ທີ່ພຣະອົງໄດ້ສັນຍານັ້ນມາສາ.*

**ຄຳຖາມ**

1. ແມ່ນຫຍັງເປັນຜົນສະທ້ອນຂອງການບໍ່ເຊື່ອຟັງ?

2. ເຮົາຮ້ອງຜົນສະທ້ອນນັ້ນວ່າແນວໃດ?

3. ເຮັດແນວໃດເຮົາຈຶ່ງຈະບໍ່ໄດ້ຮ້ອງຄ່ຳຄວນຄືອິສຣາເອນ?

4. ບົດຮຽນວັນນີ້ສອນທ່ານແນວໃດ?

*ດຣ. ທຸມພັນ ວົງສຸຣິດທ໌*

# ຄຳແນະນຳຄູຣສອນ
# ບົດຮຽນບົດທີ 13
# ຊົງຮັກຢ່າງໝັ້ນຄົງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງຄ່ຳຄວນ 3:1-9, 19-41
**ຂໍ້ພຣະຄັມທັງໝົດສຳລັບບົດຮຽນນີ້:** ເພງຄ່ຳຄວນ 3
**ຈຸດສຳຄັນຂອງບົດຮຽນນີ້:** ພຣະເຈົ້າຊົງຮັກແລະອະພັຍຫາກເຮົາຄືນມາຫາພຣະອົງ.
**ຄຳຖາມເພື່ອການສຳຣວດ:** ເຮົາຈະກັບຄືນແລະຊັກຊວນຄົນອື່ນໃຫ້ກັບໃຈແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີຄືນຫາພຣະເຈົ້າ

## ບົດນຳ

ໃນພຣະທັມບົດເພງຄ່ຳຄວນນີ້ ເປັນບົດເພງຈົ່ມຄວາມທຸກຍາກລຳບາກທີ່ຕົນເອງໄດ້ຮັບຍ້ອນບໍ່ຟັງຄວາມພຣະເຈົ້າ ມັນຄ້າຍກັບວ່າໄດ້ຕົກລົງໄປໃນຂຸມເລິກບໍ່ສາມາດຢືນຂຶ້ນໄດ້ ຈົນໃນທີ່ສຸດເພິ່ນກໍສາຣະພາບຄວາມຜິດບາບແລະມອບຄວາມຫວັງໄວ້ກັບພຣະເຈົ້າ. ເຣື່ອງນີ້ເປັນບົດຮຽນແກ່ເຮົາທັງຫລາຍຄື; ການບໍ່ເຊື່ອຟັງຄຳສັ່ງສອນຂອງອົງພຣະຜູ້ເປັນເຈົ້າເປັນໜົນທາງໄປສູ່ຄວາມຫາຍຍະນະແທ້ ໆ ແຕ່ເມື່ອຄິດຫລົບລ່າວຕ່າວຄືນຫາພຣະອົງ ໆກໍຊົງໃຫ້ອະພັຍເພາະຄວາມຮັກຂອງພຣະອົງນັ້ນໝັ້ນຄົງຕໍ່ບັນດາລູກຂອງພຣະອົງ.

ພວກນັກແຕ່ງເພງລາວເຮົາຈຳຕ້ອງແຕ່ງໃຫ້ຄຳເວົ້ານັ້ນກ່ອນກັນ ຫລືສຳຜັດກັນຕາມຫລັກການຂອງພາສາເພງຈົນຈົບເພງ, ສິ່ງສຳຄັນທີ່ສຸດແມ່ນຄຳເວົ້າສຸດທ້າຍຂອງວັກຈະຕ້ອງສອດຄ່ອງກັບຄຳເວົ້າສຸດທ້າຍຂອງແຖວສອງ. ສ່ວນກາບກອນຂອງຊາວເຮັດເຣີນັ້ນແຕກຕ່າງກັບລາວເຮົາຄືຈະເລີ້ມແຖວທີນຶ່ງດ້ວຍ <u>ອາເລັບ</u>. ຊຶ່ງເປັນຕົວອັນສອນແຣກຂອງເຮັບເຣີ. ແຖວທີສອງຈະຕ້ອງເລີ້ມຕົ້ນດ້ວຍ <u>ເບດ</u> ຊຶ່ງເປັນຕົວອັກສອນທີສອງຂອງເຮັບເຣີ. ກາບກອນຈະແຕ່ງກັນແນວນີ້ຈົນສຸດຕົວອັກສອນສຸດທ້າຍແລ້ວກໍຕັ້ງໃໝ່ຈາກອາເລັບອີກ. ໃນພຣະທັມເພງຄ່ຳຄວນບົດ 3 ຈາກຂໍ້ 1-9 ແມ່ນການຮຽງຕົວອັກສອນດັ່ງນີ້; ຂໍ້1-3 ໃຊ້ <u>ອາເລັບ</u> ສາມເທື່ອ, ຈາກ ຂໍ້ 4-6 ໃຊ້ຕົວອັກສອນ <u>ເບດ</u> ສາມເທື່ອ, ຈາກຂໍ້ 7-9 ໃຊ້ຕົວອັກສອນ <u>ກີໂມ</u> ສາມເທື່ອ. <u>ໝາຍເຫດ;</u> ພາສາເຮັບເຣີອ່ານຂວາຫາຊ້າຍ. (ຫາກທ່ານສາມາດອ່ານແລະມີພຣະຄັມພີພາສາເຮັບເຣີຈະຊ່ອຍທ່ານເຂົ້າໃຈຫລາຍຂຶ້ນ).

### <u>ອ່ານເພງຄ່ຳຄວນ 3:1-9</u>

ໃນສາມຂໍ້ແຣກເລີ້ມຕົວອັກສອນ ອາເລັບ ເປັນການບົ່ງບອກວ່າເປັນຄຳກອນສາຣະພາບສ່ວນຕົວທີ່ໄດ້ຮັບຄວາມເຈັບປວດ, ໃນກາບກອນຂອງເຮັບເຣີແມ່ນເລີ້ມດ້ວຍຄຳວ່າ ຂ້າພະເຈົ້າ, ຂ້າພະເຈົ້າ, ຂ້າພະເຈົ້າ ໃນສາມຂໍ້ທຳອິດ. ສັງເກດດັ່ງນີ້; <u>ຂໍ້ 1.</u> *ຂ້າພະເຈົ້າເປັນຄົນທີ່ໄດ້ເຫັນຄວາມທຸກໃຈ*

ຂໍ້ 2. *ແລະພາຂ້າພະເຈົ້າ* ແປວ່າຂ້າພະເຈົ້າຖືກພາໄປທາງມືດ.

ຂໍ້ 3. *ຕໍ່ສູ້ຂ້າພະເຈົ້າຢູ່ຕລອດວັນ* ແປວ່າຂ້າພະເຈົ້າຖືກພຣະເຈົ້າຕໍ່ສູ້.

ເມື່ອມາລຽງເປັນພາສາລາວແລ້ວມັນບໍ່ໄດ້ເລີ້ມດ້ວຍຄຳວ່າຂ້າພະເຈົ້າ, ສ່ວນພາສາເຮັບເຣີແມ່ນເລີ້ມດ້ວຍຄຳວ່າຂ້າພະເຈົ້າທຸກຄຳ, ສລູບເຣື່ອງມີດັ່ງນີ້; ຂ້າພະເຈົ້າໄດ້ເຫັນຄວາມທຸກ, ຂ້າພະເຈົ້າຖືກພາໄປໃນທາງມືດ, ຂ້າພະເຈົ້າຖືກພຣະອົງປ່ອຍປະ ເພາະວ່າພຣະເຈົ້າຊົງພຣະພິໂຣດ (ໃຈຮ້າຍ) ທີ່ຂ້າພະເຈົ້າບໍ່ຟັງຄວາມ. ໂທດກັມຂອງຂ້າພະເຈົ້ານັ້ນມັນຄ້າຍຄືພຣະອົງສ້າງຮົ້ວລ້ອມຂ້າພະເຈົ້າໄວ້ໃຫ້ຮັບຄວາມທຸກຍາກ, ເປັນຄືຄົນກະດູກແຂ່ງຂາຫັກໄປມາບໍ່ໄດ້, ເມື່ອ

ຂ້າພະເຈົ້າອ້ອນວອນພຣະອົງບໍ່ຍອມຟັງເພາະຂ້າພະເຈົ້າເຮັດຜິດຈົນເຮັດໃຫ້ພຣະອົງຊົງໂກດຮ້າຍ. ບົດຮຽນສຳລັບພວກເຮົາຄືໃຫ້ຟັງຄວາມພຣະອົງເພື່ອຈະບໍ່ຖືກໄມ້ແສ້ແຫ່ງພຣະພິໂຣດ.

<u>ອ່ານເພງຄໍ່າຄວນ 3:19-25</u>

ເພິ່ນໄດ້ລຳພຶງລຳພັນຄວາມຣະທົມຂົມຂື່ນ ແຕ່ໃນຖ້າມກາງການລຳພຶງລຳພັນນັ້ນເພິ່ນໄດ້ຄຶດເຖິງພຣະເມດຕາກະຣຸນາຂອງພຣະເຈົ້າ *ຂ້າພະເຈົ້າທວນຄຶດຂຶ້ນມາໄດ້ ຂ້າພະເຈົ້າມີຄວາມຫວັງຂຶ້ນ ເມື່ອຄຶດໄດ້ວ່າຄວາມຮັກໝັ້ນຄົງຂອງພຣະເຈົ້າບໍ່ເຄີຍຢຸດຢັ້ງ ແລະພຣະເມດຕາຂອງພຣະເຈົ້າບໍ່ມີສິ້ນສຸດ* ເປັນການທວນຄຶດທີ່ຖືກຕ້ອງ. ດ້ວຍວ່າຫລາຍເທື່ອມະນຸດເຮົາຈະຈົ່ມວ່າພຣະເຈົ້າບໍ່ເບິ່ງ ໂດຍລືມຄຶດໄປວ່າຕົນເອງບໍ່ເປັນຄົນເຊື່ອຟັງແລະປະຕິບັດຕາມຄຳສອນຕາມສົມຄວນ, ພຣະເຈົ້າຜູ້ຊົງເປັນພຣະບິດາຮັກບັນດາລູກຂອງພຣະອົງສເມີກັນເໝືອນດັ່ງເຮົາທັງຫລາຍຮັກລູກເຮົາທຸກຄົນສເມີກັນ, ແຕ່ ເຮົາອາດພໍໃຈກັບລູກລາງຄົນຫລາຍກວ່າ ເພາະລາວເປັນຄົນບອກໄດ້ໃຊ້ຟັງ. ດ້ວຍເຫດນີ້ຂ້າພະເຈົ້າຈຶ່ງເຂົ້າໃຈວ່າພຣະເຈົ້າຊົງຮັກທຸກຄົນສເມີກັນແທ້ ແຕ່ພຣະອົງພໍໃຈໃນຜູ້ທີ່ເຊື່ອພຣະອົງດັ່ງທີ່ເຫັນໃນເຣື່ອງອາເບນແລະກາອິນ. *"ພຣະເຈົ້າຊົງເປັນສ່ວນຂອງຂ້າພະເຈົ້າເຫດສັນນີ້ຂ້າພະເຈົ້າຈະຫວັງໃນພຣະອົງພຣະເຈົ້າຊົງດີຕໍ່ຄົນທັງປວງທີ່ຄອຍຖ້າພຣະອົງຢູ່ ແລະຊົງດີຕໍ່ຄົນທີ່ສແວງຫາພຣະອົງ*

<u>ອ່ານເພງຄໍ່າຄວນ 3:26-41</u>

ຮູ້ຢູ່ແລ້ວວ່າເປັນຄົນຜິດຕໍ່ອົງພຣະຜູ້ເປັນເຈົ້າຈຶ່ງເປັນການສົມຄວນທີ່ຈະກ່າວເໝືອນດັ່ງຂໍ້ 26-30 ໂດຍສະເພາະຜູ້ຜິດຄວນຈະງຽບສງົບບໍ່ຕໍ່ວ່າຫລືຖົກຖຽງໃດ ໆ *ໃຫ້ເຂົານັ່ງງຽບ ໆ ຢູ່ແຕ່ລຳພັງ ເພາະພຣະອົງຊົງວາງແອກນັ້ນເອງ* ຂໍ້ 28. ຍັງເປັນການສະແດງອອກເຖິງຄວາມອົດທົນ ແລະການຖ່ອມຕົວໂດຍບໍ່ຖົກຖຽງແລະຍອມຢູ່ໃຕ້ກົດຂອງພຣະເຈົ້າຕົວຢ່າງໃນພຣະທັມເຢເຣມີຢາກ່າວວ່າ *"ພວກຂ້ານ້ອຍເປັນເໝືອນງົວປ່າທີ່ດື້ດຶງ ແຕ່ພຣະອົງຊົງສອນພວກຂ້ານ້ອຍ ໃຫ້ເຊື່ອຟັງ ຂໍຊົງໂຜດຂ້ານ້ອຍໃຫ້ກັບຄືນຖ້ອນ ພຣະອົງຊົງເປັນພຣະເຈົ້າຂອງພວກຂ້ານ້ອຍ"* (ເຢເຣມີຢາ 31:18). ມັນຄ້າຍກັບຄົນຮູ້ເມື່ອຄຶງເມື່ອຮູ້ວ່າຕົນເອງຜິດກໍສົມຄວນສາຣະພາບເພື່ອຈະໄດ້ຮັບຄວາມເມດຕາສົງສານ. *ໃຫ້ເຂົາເອົາປາກຈົດໄວ້ໃນຜົງຂີ້ດິນ* (ຂໍ້ 29) ແປວ່າອ້ອນວອນໝູບໜ້າລົງດິນເປັນການສະແດງເຖິງຄວາມຍອມຈຳນົນ ແຕ່ບໍ່ໄດ້ໝາຍຄວາມວ່າຄວາມຫວັງມາຈາກການກົ້ມໜ້າລົງດິນ ແຕ່ເປັນການເລີ້ມຕົ້ນການຮ້ອງຂໍດ້ວຍຄວາມຖ່ອມໃຈ. ດ້ວຍວ່າຄວາມຜິດບາບນັ້ນໄດ້ກີດກັ້ນບັງເຮົາໄວ້ຣະຫວ່າງເຮົາກັບພຣະເຈົ້າ ແຕ່ເມື່ອສາຣະພາບບາບດ້ວຍເຂົ້າໃຈວ່າພຣະເຈົ້າບໍ່ປະຖິ້ມຜູ້ໃດ ແລະພຣະອົງມີເຫດຜົນທີ່ເຮັດໃຫ້ລູກຂອງພຣະອົງໄດ້ຮັບຄວາມໂສກເສົ້າ *ດ້ວຍວ່າພຣະເຈົ້າຈະບໍ່ຊົງປະຖິ້ມເປັນນິດດອກແຕ່ວ່າຖ້າພຣະອົງຊົງກະທຳໃຫ້ເກີດຄວາມເສົ້າໂສກ ພຣະອົງຈະຊົງພຣະກະຣຸນາຕາມຄວາມຮັກໝັ້ນຄົງອັນລົ້ນເຫລືອຂອງພຣະອົງ* (ຂໍ້ 31-32). ໃນຕອນທ້າຍຂອງເພງຄໍ່າຄວນບົດ 3 ໄດ້ລົງທ້າຍດ້ວຍຄຳສາຣະພາບແລະຊັກຊວນໃຫ້ຜູ້ອ່ານໄດ້ພິຈາຣະນາວ່າເປັນຫຍັງຕົນເອງຈຶ່ງມີຄວາມເສົ້າ ເມື່ອຮູ້ແລ້ວຈະໄດ້ຍົກຈິດໃຈແລະມືຂຶ້ນຕໍ່ພຣະເຈົ້າໃນຟ້າສວັນ ອ່ານ ຂໍ້ 39-41.

*ດຣ. ທຸມພັນ ວົງສຸຣິດທ໌*